**ຜູ້ຊີ້ນຳ**
ປທ. ນ. ບຸນມີ ຈຸນລະຈັກ
**ຄະນະບັນນາທິການ**
ປອ. ດາວສະຫວັນ ເຄືອມີໄຊ
ປອ. ສີສົມພອນ ວົງພະຈັນ
ປທ. ນ. ວະໄລລັກ ອະໄພ

**ກອງບັນນາທິການ**
ປທ. ສະນຸກສິນ ໂກສີພັນ
ນ. ພູວຽງ ແກ້ວສີມີໄຊ
ນ. ດອກໄມ້ ຈັນດາລາ
**ກອງເລຂາ**
ນ. ພູວຽງ ແກ້ວສີມີໄຊ
**ຈັດໜ້າ**
ລຳພູນ ຖຸນໄຊຍາ
**ຈຳໜ່າຍ**
ນ. ດອກໄມ້ ຈັນດາລາ
ພຸດທະພອນ ລິນອຸໄທ
**ຮູບພາບ**
ນ. ທິດດາວອນ ດວງປະເສີດ
**ແປສາລະບານ**
ລຳພູນ ຖຸນໄຊຍາ
**ຮູບພາບໜ້າປົກ**

ພິທີເຊັນບົດບັນທຶກການຮ່ວມມື 2 ຝ່າຍ ລະຫວ່າງ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະສະຖາບັນການເມືອງແຫ່ງຊາດໂຮ່ຈິມິນ ສສ ຫວຽດນາມ, ໄລຍະປີ 2024-2028 ຄັ້ງວັນທີ 25 ມິຖຸນາ 2024
**ສຳນັກງານ**
ສູນຂໍ້ມູນຂ່າວສານ
ສະຖາບັນການເມືອງແລະ
ການປົກຄອງແຫ່ງຊາດ
ບ້ານທ່າງ່ອນ ເມືອງໄຊທານີ
ນະຄອນຫຼວງວຽງຈັນ
ໂທລະສັບ/ແຟັກ: 021 752352
020 29994161
ອີເມລ:
Valasan.nappa@yahoo.com
ເວບໄຊ: www.nappa.gov.la

# ສາລະບານ

ນ. ດາລຸນນີ ແກ້ວມະນີວົງ: ໝູນໃຊ້ແນວຄິດໄກສອນ ພົມວິຫານກ່ຽວກັບການຕ້ານພະຍາດຂີ້ຄ້ານ ເຂົ້າໃນການສຶກສາອົບຮົມຖັນແຖວພະນັກງານ, ສະມາຊິກພັກ........ 1
ວຽງພັນ ຈິດສະດີ:ແນວຄິດໄກສອນ ພົມວິຫານ ຕໍ່ກັບການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ........ 6
ປາວຊົງ ຈີໄຊຊົວຕົງ: ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ ຢູ່ຄະນະໂຄສະນາອົບຮົມສູນກາງພັກ........ 12
ປທ. ນ. ອານົງ ຂັນທະຍົງ: ຍົກສູງບົດບາດຂອງອົງການຈັດຕັ້ງພັກລັດໃນການສະກັດກັ້ນ ແລະຕ້ານປາກົດການຫຍໍ້ທໍ້ ຢູ່ນະຄອນຫຼວງວຽງຈັນ........ 21
ປທ ອຸ່ນເຮືອນ ແກ້ວຍອດ:ບາງຜົນສຳເລັດໃນການຈັດຕັ້ງປະຕິບັດໂຄງການຫຼັກສູດ ການຮຽນ-ການສອນທິດສະດີການເມືອງ ຢູ່ໂຮງຮຽນການເມືອງ ແລະການປົກຄອງ ແຂວງໄຊຍະບູລີ........ 28
ຄຳອ້ວນ ອ່ອນພະຈັນ: ກໍ່ສ້າງ-ບຳລຸງພະນັກງານ-ສະມາຊິກພັກທາງດ້ານທິດສະດີການເມືອງ ແລະການປົກຄອງ ຢູ່ແຂວງອຸດົມໄຊ........ 34
ສິດທິສັກ ເກດຕະວົງ: ຍົກສູງບົດບາດວຽກງານກໍ່ສ້າງ-ບຳລຸງກຳລັງປ້ອງກັນຄວາມສະຫງົບຢູ່ປະເທດເຮົາ........ 39
ຕຸ້ຍ ໄຊມັງຫວ້າງ: ບາງຜົນສຳເລັດໃນການບໍລິຫານສານຢູ່ສານປະຊາຊົນ ແຂວງອຸດົມໄຊ........ 44
ນ. ມະລິ ສຸພັນທະວົງ: ເພີ່ມທະວີການນຳພາຂອງຄະນະພັກຕໍ່ວຽກງານການຮຽນ-ການສອນທິດສະດີການເມືອງຢູ່ໂຮງຮຽນການເມືອງ ແລະການປົກຄອງ ແຂວງບໍ່ແກ້ວ........ 51
ຂັນທະລີ ສຸຄາລັກ: ກໍ່ສ້າງ-ບຳລຸງພະນັກງານ ຢູ່ໂຮງຮຽນການເມືອງ ແລະການປົກຄອງ ແຂວງຫຼວງພະບາງ........ 59
ບຸນຖອງ ລາດສະວົງສຸກ: ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ນາຍ ແລະພົນຕຳຫຼວດຢູ່ກຳລັງປ້ອງກັນຄວາມສະຫງົບ ແຂວງບໍລິຄຳໄຊ 65
ປທ ນ. ສຸດໃຈ ວົງພະຈັນ: ຍົກສູງບົດບາດການສິດສອນຂອງແມ່ຍິງ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ........ 71
ວຽງພອນ ອິນທະວົງ: ກໍ່ສ້າງ-ບຳລຸງພະນັກງານ, ຄູ-ອາຈານ ຢູ່ໂຮງຮຽນການເມືອງ ແລະການປົກຄອງ ແຂວງຫົວພັນ........ 77
ສົມຈະເລີນ ວິລະວົງ: ຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດໃຫ້ພະນັກງານ, ສະມາຊິກພັກ ຢູ່ພະແນກການຕ່າງປະເທດ ແຂວງຜົ້ງສາລີ ໃນໄລຍະໃໝ່........ 82
ເສັງຊົ່ງ ແພຫຼວງ: ຍົກສູງຄຸນນະພາບວຽກງານເສນາທິການຂອງຫ້ອງວ່າການເມືອງອະນຸວົງ ແຂວງໄຊສົມບູນ (ຕໍ່ຈາກສະບັບເດືອນ 06/2024)........ 89
ບົວຂາວ ປານວິໄລ: ເພີ່ມທະວີການນຳພາຂອງພັກຕໍ່ວຽກງານຊາວໜຸ່ມຢູ່ເມືອງຊຽງເງິນ ແຂວງຫຼວງພະບາງ........ 90

# ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບການຕ້ານພະຍາດຂີ້ຄ້ານ ເຂົ້າໃນການສຶກສາອົບຮົມຖັນແຖວພະນັກງານ, ສະມາຊິກພັກ

ຂຽນໂດຍ: ນ. ດາລຸນນີ ແກ້ວມະນີວົງ

ພະຍາດຂີ້ຄ້ານແມ່ນ “ພຶດຕິກຳຂອງພະນັກງານທີ່ຍາມໃດກໍໃຫ້ຕົນເປັນຄົນເກັ່ງ, ອີຫຍັງກໍຮູ້ໝົດ, ຂີ້ຄ້ານສຶກສາຫາຄວາມຮູ້, ຂີ້ຄ້ານຄົ້ນຄິດ, ວຽກງານອັນໃດງ່າຍພັດຢາກເຮັດ, ວຽກງານອັນໃດຍາກກໍຖິ້ມໃຫ້ຜູ້ອື່ນ, ພົບວຽກງານອັນຕະລາຍກໍຫາວິທີຫຼົບຫຼີກ”[1]. ພະຍາດຂີ້ຄ້ານເປັນໄພອັນຕະລາຍຫຼາຍເພາະຖ້າເກີດຂຶ້ນຢູ່ປະເທດໃດແລ້ວມັນຈະສ້າງຄວາມເສຍຫາຍຢ່າງຫຼວງຫຼາຍໃຫ້ປະເທດນັ້ນ, ມັນຈະເຈາະຈົ້ມເຂົ້າໃນໂຄງສ້າງຂອງລັດ ແລະສິ່ງຜົນກະທົບໂດຍກົງທາງດ້ານຊັບສິນບັດ, ຊື່ສຽງ ແລະກຽດສັກສີໃຫ້ແກ່ປະເທດຊາດ ແລະລະບອບການເມືອງ. ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: “ຕ້ອງຕໍ່ສູ້ຕ້ານພະຍາດຂີ້ຄ້ານ, ເກາະກິນ, ຫຼົບຫຼີກຄວາມຮັບຜິດຊອບ”[2]. ພະຍາດຂີ້ຄ້ານແມ່ນປາກົດການຫຍໍ້ທໍ້ໜຶ່ງໃນສັງຄົມທີ່ເກີດຂຶ້ນໃນອົງການຈັດຕັ້ງບໍລິຫານລັດໂດຍບໍ່ຈຳແນກລະບອບການເມືອງ, ບັນຫານີ້ເປັນບັນຫາໜັກໜ່ວງ, ເລິກແລບ ແລະເພີ່ມທະວີຂຶ້ນເລື້ອຍໆ; ພະຍາດຂີ້ຄ້ານມັນມີການພົວພັນກັບທຸກຂັ້ນ, ທຸກຂອດໃນຊີວິດສັງຄົມ ທັງເຮັດໃຫ້ອຳນາດລັດອ່ອນເພຍ, ການພັດທະນາເສດຖະກິດ-ສັງຄົມຖືກຢຸດສະຫງັກ, ມີຄວາມຊັກຊ້າ ແລະສັງຄົມບໍ່ຍຸຕິທຳ. ພະຍາດຂີ້ຄ້ານສະແດງອອກຄື: ບໍ່ກຳແໜ້ນແນວທາງ, ນະໂຍບາຍຂອງພັກ, ເຮັດວຽກໂດຍບໍ່ມີແຜນການ, ບໍ່ມີຈຸດສຸມ, ເຮັດແບບມະລຸ້ມມະລ້ວຍ, ບໍ່ມີການສືບສວນຄົ້ນຄວ້າ, ບໍ່ລະດົມ ແລະນຳໃຊ້ພະນັກງານ, ອົງການຊ່ວຍວຽກ, ແບບແຜນນຳພາແບບນ້ຳຖ້ວມທົ່ງ, ບໍ່ນັບຖືມະຕິຄຳສັ່ງຂອງຂັ້ນເທິງ, ເຮັດວຽກຕາມໃຈມັກຂອງຕົນເອງ, ຖືວ່າອັນໃດໂຕກໍເກັ່ງແລ້ວ, ວຽກໃດໂຕກໍຮູ້ແລ້ວ, ຂີ້ຄ້ານພິຈາລະນາ, ບໍ່ຢາກເຮັດວຽກຍາກ, ມັກວຽກງ່າຍ, ເມື່ອພົບພໍ້ບັນຫາຫຍຸ້ງຍາກລຳບາກກໍຊອກວິທີຫຼົບຫຼີກ, ເວລາປະຕິບັດຄຳສັ່ງພົບຄວາມຫຍຸ້ງຍາກບໍ່ມ່ວນຊື່ນເບີກບານ, ບໍ່ວ່ອງໄວ, ປະຕິບັດພໍແລ້ວເລື່ອງ ແລະບໍ່ຕັ້ງໃຈເຮັດວຽກແຕ່ຕົ້ນເຖິງປາຍ. ຜົນກະທົບຂອງພະຍາດຂີ້ຄ້ານແມ່ນ: ມ້າງເພການຈັດຕັ້ງພັກ, ປະໂອກາດໃຫ້ເສຍໄປ ແລະເວລາເຮັດກໍຊັກຊ້ານັ້ນກໍຍ້ອນຂີ້ຄ້ານ. ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: “ຕ້ອງບຳລຸງນ້ຳໃຈຟົດຟື້ນອອກແຮງງານ, ນ້ຳໃຈຕັ້ງໜ້າຮັບໃຊ້ການຜະລິດ ແລະຊີວິດການເປັນຢູ່ຂອງປະຊາຊົນ, ບຳລຸງນ້ຳໃຈແພງຖະໜອມສິ່ງຂອງສ່ວນລວມ, ເຊີດຊູຈິດໃຈປະຢັດມັດທະຍັດ, ຕ້ານພະຍາດຂີ້ຄ້ານ, ເກາະກິນ, ຊູດຮີດ, ໂລບມາກໂລພາ, ຟູມເຟືອຍ”[3].

ປາກົດການພະຍາດຂີ້ຄ້ານແມ່ນໜຶ່ງໃນ

---

(1) ໂຮ່ຈິມິນ, ນິພົນຄົບຊຸດ ເຫຼັ້ມ V, ປີ 1947-1948, ໜ້າ 321.

(2) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ II, ປີ 1987, ໜ້າ 177.

(3) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ II, ປີ 1987, ໜ້າ 59.

ບັນດາປາກົດການທີ່ມີຜົນກະທົບຕໍ່ການສ້າງສາ, ພັດທະນາປະເທດ ແລະການຢືນຍົງຄົງຕົວຂອງລະບອບໃໝ່, ລັດຖະບານ ແລະພົນລະເມືອງທຸກຄົນຮັບຮູ້ແຈ້ງເຖິງຜົນຮ້າຍ, ຄວາມອັນຕະລາຍຂອງປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນການຂີ້ຄ້ານອ່ານ, ຂີ້ຄ້ານຄິດຫງໍ່າ, ບໍ່ສະແຫວງຫາຄວາມຮູ້ ແລະບົດຮຽນໃໝ່ ແລະຢູ່ຊື່ໆຕາມຄວາມຊິນເຄີຍເກົ່າ ເຮັດໃຫ້ປະຊາຊົນຂາດຄວາມໄວ້ວາງໃຈ ແລະເຊື່ອໝັ້ນ. ຍ້ອນແນວນັ້ນພັກ ແລະລັດຈຶ່ງໄດ້ວາງນະໂຍບາຍສະກັດກັ້ນ ແລະຕ້ານພະຍາດຂີ້ຄ້ານ ໂດຍຖືວ່າວຽກງານດັ່ງກ່າວເປັນວຽກໜຶ່ງທີ່ມີຄວາມຈຳເປັນຕ້ອງໄດ້ແກ້ໄຂຢ່າງຮີບດ່ວນ ແລະຈະຕ້ອງໄດ້ປະຕິບັດຢ່າງຕໍ່ເນື່ອງ, ຖືເປັນໜ້າທີ່ ແລະຄວາມຮັບຜິດຊອບຂອງພັກ-ລັດ, ອົງການບໍລິຫານທຸກຂັ້ນ, ທຸກຂະແໜງການ; ໄປຄຽງຄູ່ກັບການປັບປຸງກົງຈັກລັດໃຫ້ມີຄວາມໜັກແໜ້ນ ແລະເຂັ້ມແຂງ. ດັ່ງນັ້ນ, ການຕ້ານພະຍາດຂີ້ຄ້ານຈຶ່ງແມ່ນໜ້າທີ່ຂອງໝົດທຸກຄົນກໍຄືທຸກພາກສ່ວນ, ທຸກອົງການ, ທຸກກົມກອງ ແລະທຸກການຈັດຕັ້ງສັງຄົມ. ປະທານ ໄກສອນ ພົມວິຫານ ໄດ້ໃຫ້ທັດສະນະວ່າ: "ຕ້ອງຊອກຮູ້ຮໍ່າຮຽນເພື່ອຍົກລະດັບຄວາມຮູ້ຂອງຕົນໃນທຸກດ້ານໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ ໂດຍສະເພາະແມ່ນຄວາມຮູ້ຕ່າງໆທີ່ພົວພັນເຖິງຂະແໜງການຂອງຕົນ, ທີ່ກ່ຽວພັນເຖິງວຽກງານທີ່ຕົນຮັບຜິດຊອບ"(1).

ພະຍາດຂີ້ຄ້ານ ແມ່ນໜຶ່ງໃນພະຍາດທີ່ຕິດແປດກັບຂະບວນວິວັດແຫ່ງການຄົງຕົວ ແລະຂະຫຍາຍຕົວຂອງອຳນາດລັດ, ມັນໄດ້ກຳເນີດ, ຄົງຕົວ ແລະຂະຫຍາຍຕົວບົນພື້ນຖານແຫ່ງການເສື່ອມເສຍຄຸນທາດກ່ຽວກັບສິດ, ອຳນາດຂອງພະນັກງານທີ່ຢູ່ໃນກົງຈັກລັດ, ໄດ້ມີພະນັກງານບາງຄົນ, ບາງກຸ່ມມີແນວຄິດຂີ້ຄ້ານ. ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: "ພວກເຮົາຕ້ອງຮັບຮູ້ຄວາມເປັນຈິງທີ່ວ່າ: ຖັນແຖວພະນັກງານ, ສະມາຊິກພັກຂອງພວກເຮົາຍັງຕິດພະຍາດຮ້າຍແຮງຊະນິດໜຶ່ງນັ້ນຄືພະຍາດຂີ້ຄ້ານອ່ານ, ຂີ້ຄ້ານຄົ້ນຄວ້າຮໍ່າຮຽນ, ຂີ້ຄ້ານຄິດຫງໍ່າ, ບໍ່ສະແຫວງຫາຄວາມຮູ້ ແລະບົດຮຽນໃໝ່, ມັກຢູ່ຊື່ໆຕາມຄວາມຊິນເຄີຍແບບຊາວນາ ແລະຜູ້ຜະລິດນ້ອຍ"(2). ປະທານ ໄກສອນ ພົມວິຫານ ໄດ້ສຶກສາ, ຄົ້ນຄວ້າ ແລະເຫັນໄດ້ສະພາບຂອງຖັນແຖວພະນັກງານ. ດັ່ງນັ້ນ, ເພິ່ນຖືວ່າວຽກງານພະນັກງານເປັນວຽກທີ່ສຳຄັນ, ທັງມີຄວາມຈຳເປັນ ແລະຮີບດ່ວນ, ເປັນປັດໄຈຕັດສິນໄຊຊະນະ ຫຼື ປາລາໄຊໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ. ວຽກງານພະນັກງານຍັງເປັນວຽກງານທີ່ລະອຽດອ່ອນ, ສັບສົນ, ຫຍຸ້ງຍາກເພາະວ່າແມ່ນວິທະຍາສາດກ່ຽວກັບຄົນ ເຊິ່ງຜູ້ທີ່ເຮັດວຽກງານພະນັກງານຕ້ອງຮູ້ພະນັກງານ, ເຂົ້າໃຈພະນັກງານ, ຮັກພະນັກງານ ແລະຮູ້ໃຊ້ພະນັກງານ. ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: "ນໍ້າໃຈຟົດຟື້ນປະຕິວັດຂອງພະນັກງານ-ສະມາຊິກພັກຂອງພວກເຮົາຈຳນວນໜຶ່ງໄດ້ຫຼຸດລົງ ສະແດງອອກໃນຄວາມບໍ່ຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງ, ຮັກສາແບບວິທີການປະຕິບັດໃນຜ່ານມາແຕ່ສະໄໝສົງຄາມ, ຂາດຄວາມຫ້າວຫັນ, ເປັນແບບຢ່າງນຳໜ້າ, ຂີ້ຄ້ານ, ມັກ

(1) ບົດຄວາມເຫັນຂອງປະທານ ໄກສອນ ພົມວິຫານກ່າວສະຫຼຸບກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກ, ຄັ້ງທີ 5 ສະໄໝທີ IV, ປີ 1988, ໜ້າ 44.
(2) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ 4, ປີ 2005, ໜ້າ 512.

ງ່າຍ, ຂີ້ຄ້ານຊອກຫາຄວາມຮູ້ອັນໃໝ່, ຍິ່ງໄປກວ່ານັ້ນມີພະນັກງານຈຳນວນໜຶ່ງອີກຊ້ຳພັດເສຍທາດຂາດຄຸນ, ມົວເມົາສະແຫວງຫາແຕ່ຜົນປະໂຫຍດສ່ວນຕົວທີ່ບໍ່ຊອບທຳ, ສໍ້ລາດບັງຫຼວງ, ກິນສິນບົນ, ແລ່ນນຳແຕ່ເງິນຄຳ, ປ່ອຍປະໜ້າທີ່ວຽກງານ ຫຼື ຕິດແປດພະຍາດອາດຍາສິດ, ລວງອຳນາດ, ບໍ່ເປັນຫ່ວງເປັນໄຍເຖິງຄວາມເປັນຕາຍຮ້າຍດີຂອງປະຊາຊົນ"[1]. ເພິ່ນຍັງເວົ້າອີກວ່າ: "ວຽກງານພະນັກງານເປັນວຽກທີ່ຕ້ອງເຮັດຢ່າງເນື່ອງນິດລຽນຕິດ, ເຮັດຢ່າງມີແຜນການ, ມີຈຸດສຸມ, ຈຸດເລັ່ງຢ່າງຈະແຈ້ງພ້ອມທັງເຮັດຢ່າງຄົບຊຸດ ເລີ່ມແຕ່ການເລືອກເຟັ້ນ, ກໍ່ສ້າງ-ບຳລຸງ, ບັນຈຸ, ສັບຊ້ອນ, ຈັດວາງ, ການຄຸ້ມຄອງ-ປ້ອງກັນຕີລາຄາ ແລະການປະຕິບັດນະໂຍບາຍດ້ານຕ່າງໆຕໍ່ພະນັກງານເປັນສາຍກ່ຽວພັນແບບກາຍອິນຊີ, ມີການຂຶ້ນແຜນກໍ່ສ້າງ-ບຳລຸງພະນັກງານຢ່າງຈະແຈ້ງ, ຮັບປະກັນດັດສົມຖັນແຖວພະນັກງານແຕ່ລະພາກສ່ວນ, ແຕ່ລະຂົງເຂດ ແຕ່ລະຮຸ່ນສືບທອດໂດຍຕິດພັນສອດຄ່ອງ ແລະຕອບສະໜອງກັບໜ້າທີ່ການເມືອງຂອງພັກແຕ່ລະໄລຍະ"[2].

ຍ້ອນແນວນັ້ນ, ການຕ້ານພະຍາດຂີ້ຄ້ານຈຶ່ງແມ່ນໜຶ່ງໃນບັນຫາທີ່ຄວນເອົາໃຈໃສ່ຢືນຢູ່ແຖວໜ້າ. ສຳລັບຜູ້ທີ່ຕິດພະຍາດຂີ້ຄ້ານນີ້ບໍ່ຮູ້ວ່າ: "ພັກອຸປະມາຄືຮ່າງກາຍຂອງຄົນເຮົາ, ຄຳສັ່ງ ແລະມະຕິປຽບດັ່ງສາຍເລືອດ, ຢູ່ບ່ອນໃດເລືອດໄຫຼບໍ່ເຖິງ, ຢູ່ບ່ອນນັ້ນກໍຈະພິການ, ເກີດເປັນພະຍາດໄດ້. ຄຳສັ່ງ ແລະມະຕິແຕ່ຂັ້ນເທິງລົງຮອດຂັ້ນລຸ່ມໄວ, ວຽກງານກໍຈະແລ້ວໄວ. ຖ້າມັນຕິດຂັດຢູ່ຂັ້ນໃດກໍແມ່ນວ່າມັນຈະພິການແຕ່ຂັ້ນນັ້ນລົງໄປ, ບໍ່ຮູ້ທີ່ບຈະເຮັດ"[3]. ປະທານ ໄກສອນ ພົມວິຫານ ບໍ່ແມ່ນແຕ່ຈະມີນ້ຳໃຈຮັກຊາດເທົ່ານັ້ນ, ແຕ່ຍັງມີສະຕິຊົນຊັ້ນທີ່ເລິກເຊິ່ງ, ອັນທີ່ປະທານ ເພິ່ນຕ່າງກັບຜູ້ອື່ນອີກອັນໜຶ່ງ ກໍຄືການຮ່ຳຮຽນ, ປະທານໄດ້ອອກແຮງຮ່ຳຮຽນຢ່າງບໍ່ຢຸດຢັ້ງ. ປະທານ ໄກສອນ ພົມວິຫານ ຍາມໃດກໍເປັນຫ່ວງເປັນໄຍຕໍ່ການຮ່ຳຮຽນ, "ປະທານໄດ້ອອກແຮງຮ່ຳຮຽນຢ່າງບໍ່ຢຸດຢັ້ງ, ປະທານທັງຮຽນທິດສະດີ, ທັງທາງດ້ານບົດຮຽນ, ທັງລົງທາງພາກປະຕິບັດຕົວຈິງ, ປະທານບໍ່ໄດ້ອຽງອາຍໃນການຮຽນນຳໝູ່ຄູ່, ນຳອ້າຍນ້ອງຊັ້ນລ່າງ. ປະທານເຄີຍເວົ້າໄວ້ວ່າຕ້ອງຮຽນ, ຮຽນ ແລະຮູ້ແລ້ວຈຶ່ງມີການກະທຳປະຕິບັດທີ່ຖືກຕ້ອງ"[4].

ໃນໄລຍະຜ່ານມາ ເຖິງວ່າຄະນະພັກ, ອົງການປົກຄອງ, ອົງການຈັດຕັ້ງຕ່າງໆໄດ້ເອົາໃຈໃສ່ກວດກາ, ຕ້ານ, ແລະສະກັດກັ້ນປາກົດການຫຍໍ້ທໍ້ໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກຢູ່ບັນດາສຳນັກງານອົງການ, ຂັ້ນຕ່າງໆໃຫ້ມີຜົນສຳເລັດຫຼາຍດ້ານກໍຕາມ ແຕ່ກໍຍັງມີບາງດ້ານຂໍ້ຄົງຄ້າງ ແລະຈະຕ້ອງໄດ້ຮັບການແກ້ໄຂໃນຕໍ່ໜ້າດັ່ງນີ້:

1). ຄະນະພັກ, ອົງການປົກຄອງຂັ້ນຕ່າງໆຍັງບໍ່ທັນເປັນເຈົ້າການໃນການຕ້ານພະ

(1) ລະນຶກ 90 ປີ ວັນເກີດປະທານ ໄກສອນ ພົມວິຫານ (ສະຖາບັນວິທະຍາສາດແຫ່ງຊາດ), ປີ 2011, ໜ້າ 71.

(2) ແນວຄິດໄກສອນ ພົມວິຫານໃນການສ້າງ ແລະຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນຕາມເສັ້ນທາງສັງຄົມນິຍົມ, ປີ 2006, ໜ້າ 167.

(3) ໂຮ່ຈີມິນ, ນິພົນຄົບຊຸດ ເຫຼັ້ມ V, ປີ 1947-1948, ໜ້າ 326.

(4) ຄຸນສົມບັດຂອງປະທານ ໄກສອນ ພົມວິຫານ, ປີ 1995, ໜ້າ 23.

ຍາດຂີ້ຄ້ານ, ຍັງບໍ່ທັນຈັດຕັ້ງປະຕິບັດຢ່າງເປັນລະບົບ ແລະຕໍ່ເນື່ອງເທື່ອ ເປັນຕົ້ນ: ການຮ່ວມຊີວິດການເມືອງ, ຂາດການສຳຫຼວດກວດກາ, ການຕີລາຄາປະເມີນຜົນ ແລະການຕຳນິສິ່ງຂ່າວ ເພື່ອຊ່ວຍເຫຼືອ, ກໍ່ສ້າງເຊິ່ງກັນແລະກັນບໍ່ທັນເປັນປົກກະຕິ. ວິທີການຈັດຕັ້ງປະຕິບັດຍັງເຮັດແບບລວມໆ, ເວລາພົບເຫັນບັນຫາກໍບໍ່ໄດ້ຮັບການແກ້ໄຂຢ່າງເຂັ້ມງວດ, ເດັດຂາດ ແລະບາງຄັ້ງຍັງມີແນວຄິດເຫັນອົກເຫັນໃຈກັນ.

2). ພະນັກງານ-ລັດຖະກອນ ແລະສະມາຊິກພັກຈຳນວນໜຶ່ງຍັງມີແນວຄິດຂີ້ຄ້ານສຶກສາຫາຄວາມຮູ້, ຂີ້ຄ້ານຄົ້ນຄິດ, ຂີ້ຄ້ານຄົ້ນຄວ້າຮ່ຳຮຽນ, ບໍ່ກຳແໜ້ນແນວທາງ, ນະໂຍບາຍຂອງພັກ ແລະກົດໝາຍ, ລະບຽບຂອງລັດ, ເຮັດວຽກໂດຍບໍ່ມີແຜນການ, ຂາດການວາງແຜນ, ເຮັດວຽກບໍ່ມີຈຸດສຸມ, ບໍ່ປະຕິບັດຕາມມະຕິ, ຄຳສັ່ງຂອງຂັ້ນເທິງວາງອອກ, ເຮັດວຽກໄປຕາມໃຈມັກຂອງຕົນເອງ, ຖືວ່າອັນໃດກໍຕົນເອງເກັ່ງ, ຕົນເອງຮູ້, ຂີ້ຄ້ານພິຈາລະນາ, ວຽກໃດຕິດພັນກັບຜົນປະໂຫຍດ, ວຽກໃດງ່າຍພັດຢາກເຮັດ, ວຽກໃດຍາກແມ່ນຖິ້ມໃຫ້ຜູ້ອື່ນເມື່ອເຮັດວຽກພົບບັນຫາກໍຊອກຫາວິທີລົບຫຼີກ ແລະຖິ້ມຄວາມຮັບຜິດຊອບໃຫ້ຜູ້ອື່ນນີ້ແມ່ນເກີດມາຈາກພະຍາດຂີ້ຄ້ານ.

3). ພະນັກງານ-ລັດຖະກອນ, ສະມາຊິກພັກໃນກົງຈັກລັດຈຳນວນໜຶ່ງເສື່ອມຖອຍທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ບໍ່ມີຄວາມຈູບຈ້າວຫ້າວຫັນໃນໜ້າທີ່ວຽກງານ, ສະພາບການດັ່ງກ່າວເຮັດໃຫ້ເກີດຜົນເສຍຫາຍທາງດ້ານການເມືອງ, ເຮັດໃຫ້ຄວາມເຊື່ອໝັ້ນຂອງປະຊາຊົນ ຕໍ່ການນຳພາຂອງພັກ-ລັດຫຼຸດລົງ, ເກີດມີປາກົດການທໍ້ຖອຍໃນສັງຄົມ, ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບແລະບໍ່ມີຄວາມຍຸຕິທຳ.

4). ສະຕິເຄົາລົບ ແລະປະຕິບັດກົດໝາຍ, ລະບຽບການຕ່າງໆຂອງລັດທີ່ໄດ້ວາງອອກຂອງຖັນແຖວພະນັກງານ-ລັດຖະກອນຢູ່ອົງການຈັດຕັ້ງພັກ-ລັດຈຳນວນໜຶ່ງ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ໂດຍສະເພາະແມ່ນການຜັນຂະຫຍາຍແນວທາງຂອງພັກ, ລັດໃນແຕ່ລະໄລຍະເຂົ້າໃນຄວາມຮັບຜິດຊອບໜ້າທີ່ວຽກງານຂອງຕົນ.

ເພື່ອເສີມຂະຫຍາຍຄຸນຄ່າທາງດ້ານທິດສະດີ ແລະພຶດຕິກຳຂອງແນວຄິດໄກສອນ ພົມວິຫານໃນການຕ້ານພະຍາດຂີ້ຄ້ານໃຫ້ສອດຄ່ອງກັບສະພາບຈຸດພິເສດຄວາມເປັນຈິງໃນປັດຈຸບັນນັ້ນຕາມທັດສະນະຂອງຜູ້ຂຽນແລ້ວເຫັນວ່າຄວນເອົາໃຈໃສ່ບາງວຽກງານດັ່ງນີ້:

ໜຶ່ງ, ເພີ່ມທະວີການນຳພາ-ຊີ້ນຳຂອງຄະນະພັກ, ອົງການປົກຄອງຂັ້ນຕ່າງໆດ້ວຍການສຶກສາອົບຮົມການເມືອງ-ແນວຄິດ, ຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ສ້າງສະຕິກົດໝາຍໃຫ້ແກ່ພະນັກງານ-ລັດຖະກອນຢູ່ໃນອົງການຈັດຕັ້ງຂອງພັກ-ລັດໃຫ້ກຳແໜ້ນພາລະບົດບາດ, ຄວາມຮັບຜິດຊອບ ແລະໜ້າທີ່ການເມືອງຂອງຕົນໃນການຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ-ລັດວາງອອກໃນແຕ່ລະໄລຍະໃຫ້ປາກົດຜົນເປັນຈິງ; "ບັນດາສຳນັກງານຊີ້ນຳຕ້ອງມີວິທີການນຳພາໃຫ້ຖືກຕ້ອງ, ວຽກງານຫຍັງກໍຕ້ອງແນະນຳວິທີເຮັດ, ຂັ້ນທີງຕ້ອງກຳສະພາບການຂອງຂັ້ນລຸ່ມ ແລະຂອງມະຫາຊົນໃຫ້ດີເພື່ອຈະໄດ້ຊີ້ນຳໃຫ້ຖືກ"[1].

ສອງ, ກ່ອນອື່ນໝົດຕ້ອງເອົາໃຈໃສ່ເຝິກ

[1] ໂຮ່ຈີມິນ, ນິພົນຄົບຊຸດ ເຫຼັ້ມ V, ປີ 1947-1948, ໜ້າ 326.

ຝຶກຫຼໍ່ຫຼອມພະນັກງານແຕ່ລະຂັ້ນໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີແບບແຜນດຳລົງຊີວິດທີ່ປອດໃສຂາວສະອາດ, ມີຄວາມຮູ້ທາງດ້ານທິດສະດີມາກ-ເລນິນ ໃນລະດັບທີ່ແນ່ນອນ, ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ ດ້ວຍຫຼາຍຮູບ, ຫຼາຍລະດັບ, ກໍ່ສ້າງ-ບຳລຸງໃຫ້ໄດ້ພະນັກງານທີ່ມີຄຸນສົມບັດສິນທຳປະຕິວັດຢ່າງແທ້ຈິງ, ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮູ້, ຄວາມສາມາດສົມຄູ່ກັບໄລຍະໃໝ່,ຍ້ອນວ່າພະນັກງານເປັນຜູ້ເຜີຍແຜ່, ເປັນຜູ້ຈັດຕັ້ງປະຕິບັດ, ເປັນຜູ້ເກັບກຳ, ລວມລວມລາຍງານວຽກງານເພາະວ່າໃນທຸກຂົງເຂດວຽກງານຈະດີ ຫຼື ອ່ອນ, ຊ້າ ຫຼື ໄວ, ມີປະສິດທິຜົນ ຫຼື ບໍ່ນັ້ນ ແມ່ນພະນັກງານເປັນຜູ້ຕັດສິນ.

ສາມ, ຄຸນສົມບັດສິນທຳປະຕິວັດ, ຄວາມຮູ້, ຄວາມສາມາດ, ຫຼັກໝັ້ນຂອງພະນັກງານ, ສະມາຊິກພັກກໍແມ່ນອົງປະກອບທີ່ສຳຄັນຂອງຄຸນທາດການເມືອງ, ບໍ່ສາມາດຕັດແຍກອອກຈາກກັນໄດ້, ຖ້າຂາດດ້ານໃດດ້ານໜຶ່ງກໍຈະເຮັດໃຫ້ຄຸນທາດການເມືອງບໍ່ສົມບູນ. ປະທານ ໄກສອນ ພົມວິຫານໄດ້ໃຫ້ຄຳຕັກເຕືອນພວກເຮົາໄວ້ວ່າ: "ຕ້ອງຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງຢ່າງບໍ່ຢຸດຢັ້ງ ນັ້ນຄືທີ່ມາຂອງຄວາມຮູ້, ຄວາມສາມາດຮອບດ້ານຂອງພະນັກງານ ເຊິ່ງກ່ອນອື່ນແມ່ນຄວາມຕື່ນຕົວທາງດ້ານການເມືອງ ແລະດ້ານຊົນຊັ້ນ ຍາມໃດກໍຖະໜອມຖ່ອມຕົວຮ່ຳຮຽນນຳໝູ່ຄະນະ ແລະມະຫາຊົນ, ມີສະຕິສູງຕໍ່ການປະພຶດ, ທຳສິ່ງດີໃຫ້ຫຼາຍຈະຄ່ອຍຫຼຸດຜ່ອນຈຸດອ່ອນລົງ, ເວລາໄດ້ດີບໍ່ທະເຍີທະຍານ, ເວລາຜິດພາດກໍ່ທຸ້ນທ່ຽງບໍ່ທໍ້ຖອຍເສຍກຳລັງໃຈ"[1].

ສີ່, ການຕ້ານພະຍາດຂີ້ຄ້ານຕ້ອງໄດ້ເຮັດຢ່າງປົກກະຕິ, ຕໍ່ເນື່ອງ ດ້ວຍຫຼາຍຮູບຫຼາຍສີ ແລະວິທີການ, ເອົາໃຈໃສ່ໃນການສຳຫຼວດກວດກາ, ຕຳນິ, ສິ່ງຂ່າວ, ຊ່ວຍເຫຼືອກໍ່ສ້າງເຊິ່ງກັນແລະກັນ, ເມື່ອເຫັນວ່າມີໜໍ່ແໜງເກີດຂຶ້ນກໍຕ້ອງພ້ອມກັນສະກັດກັ້ນ ແລະຕ້ານ, ແກ້ໄຂຈຸດອ່ອນ ແລະຂໍ້ຄົງຄ້າງ, ປັບປຸງຕົນເອງໃຫ້ມີຄວາມດຸໝັ່ນ, ຊອກຮູ້ຮ່ຳຮຽນ ແລະເຮັດວຽກໃຫ້ມີປະສິດທິພາບສູງ.

ຫ້າ, ໃນການຕີລາຄາ ປະເມີນຜົນຍ້ອງຍໍຊົມເຊີຍຜູ້ທີ່ມີຜົນງານດີເດັ່ນ, ການປະຕິບັດວິໄນ, ສຶກສາອົບຮົມຜູ້ຂີ້ຄ້ານ, ຜູ້ທີ່ມີຄຸນທາດການເມືອງເສື່ອມຖອຍ, ຂາດຄວາມຫ້າວຫັນໃນໜ້າທີ່ວຽກງານ, ລວມທັງການປັບປຸງ, ຈັດວາງ, ສັບຊ້ອນພະນັກງານຂັ້ນຕ່າງໆໃນ, ການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງຕ່າງໆແມ່ນຄວນປະຕິບັດແບບຍຸຕິທຳ, ເປີດເຜີຍ, ຮັບປະກັນການຕີລາຄາທີ່ຖືກຕ້ອງທີ່ສຸດ, ສາມາດສົ່ງເສີມດ້ານດີ ແລະແກ້ໄຂດ້ານຄົງຄ້າງໃຫ້ໝົດໄປເທື່ອລະກ້າວ. ຄວນຫຼີກລ່ຽງ ແລະເປັນເຈົ້າການຕ້ານການຕີລາຄາແບບລວມໆເຫັນອົກເຫັນໃຈກັນ, ຮັກແພງສ່ວນຕົວ, ຂາດປະຊາທິປະໄຕ. ດັ່ງຄຳເວົ້າຂອງປະທານ ໄກສອນ ພົມວິຫານ ທີ່ວ່າ: "ໃນເວລາສັງເກດຕີລາຄາ, ເລືອກເຟັ້ນ ແລະຈັດວາງພະນັກງານັ້ນຕ້ອງຫຼີກເວັ້ນບັນດາປາກົດການແນວຄິດຄັບແຄບ, ອະຄະຕິສ່ວນບຸກຄົນ (ຮັກບັງຊັງບ່ງ), ແນວຄິດພັກພວກ, ເຫັນແກ່ເຊື້ອສາຍຕະກຸນ, ຍາດພີ່ນ້ອງ, ເພື່ອນຝູງ ຫຼື ທ້ອງຖິ່ນ ແລະຄົນເຜົ່າດຽວກັນ"[2].

ສັງລວມແລ້ວ, ແນວຄິດໄກສອນ ພົມວິ

[1] ປະທານ ໄກສອນ ພົມວິຫານ ຍືນຍົງຄົງຕົວໃນພາລະກິດປະຕິວັດອັນຍິ່ງໃຫຍ່ຂອງປະຊາຊົນລາວບັນດາເຜົ່າຕະຫຼອດໄປ, ປີ 2014, ໜ້າ 426.

[2] ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ III, ປີ 1997, ໜ້າ 171.



ອ່ານຕໍ່ໜ້າ 33

# ແນວຄິດໄກສອນ ພົມວິຫານ ຕໍ່ກັບການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ

ຂຽນໂດຍ: ວຽງພັນ ຈິດສະດີ

ວຽກງານກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ແມ່ນກົກຂອງທຸກວຽກງານ, ເປັນປັດໄຈສຳຄັນໃນການສ້າງພະນັກງານສືບທອດປ່ຽນແທນທີ່ມີຄຸນນະພາບ ເພື່ອຍົກສູງວຽກງານກໍ່ສ້າງຖັນແຖວພະນັກງານນຳພາ-ຄຸ້ມຄອງໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສົນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດຢູ່ແຕ່ລະຂັ້ນ, ແຕ່ລະຂະແໜງການ ແມ່ນພາລະກິດທີ່ຈຳເປັນຂອງທົ່ວພັກ-ທົ່ວປວງຊົນລາວທັງຊາດ ແລະແມ່ນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນໃນສະພາບການໃນປັດຈຸບັນ. ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ກໍຄືການປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ ເພາະວ່າພະນັກງານນຳພາ-ຄຸ້ມຄອງມີບົດບາດຕັດສິນໃນການນຳພາ-ຊີ້ນຳ ແລະຈັດຕັ້ງປະຕິບັດແນວທາງຂອງພັກ ແລະນະໂຍບາຍຕ່າງໆຂອງລັດທີ່ວາງອອກໃຫ້ປາກົດຜົນເປັນຈິງ.

ຍ້ອນແນວນັ້ນປະທານ ໄກສອນ ພົມວິຫານຍາມໃດເພິ່ນກໍເປັນຫ່ວງ, ເປັນໄຍ ແລະໃຫ້ທິດຊີ້ນຳຢ່າງໃກ້ຊິດຕິດແທດຕໍ່ວຽກງານກໍ່ສ້າງ-ບຳລຸງພະນັກງານຢ່າງລະອຽດ, ຈະແຈ້ງເພິ່ນເວົ້າວ່າມີຖັນແຖວພະນັກງານນຳພາ-ຄຸ້ມຄອງທີ່ເກັ່ງຈຶ່ງສາມາດເຮັດໃຫ້ແນວທາງ, ໜ້າທີ່ການເມືອງກາຍເປັນໝາກຜົນຕົວຈິງ, ຈຶ່ງຈະສ້າງ ແລະປົກປັກຮັກສາແນວທາງການເມືອງຂອງພັກໃຫ້ຖືກຕ້ອງ, ຂະຫຍາຍຕົວເລື້ອຍໆ ແລະຈະເຮັດໃຫ້ແນວທາງການເມືອງກາຍເປັນອັນລະອຽດ, ທີ່ສອດຄ່ອງກັບຜົນປະໂຫຍດຂອງມະຫາຊົນໄດ້. ກ່ອນອື່ນໝົດຕ້ອງເຮັດໃຫ້ພະນັກງານນຳພາ-ຄຸ້ມຄອງມີແນວຄິດ ແລະອຸດົມຄະຕິປະຕິວັດ, ຈົງຮັກພັກດີ ແລະບໍລິສຸດສັດຊື່ຮັບໃຊ້ຊາດຮັບໃຊ້ປະຊາຊົນຢ່າງແທ້ຈິງ: “ຖັນແຖວພະນັກງານຂັ້ນສູງຂອງພວກເຮົາເປັນກອງເສນາທິການທົ່ວສະໝອງຂອງພັກ ແລະລັດຢູ່ສູນກາງ ຫຼື ຢູ່ທ້ອງຖິ່ນ ເຊິ່ງເປັນບ່ອນຕົກລົງທຸກແຜນນະໂຍບາຍ, ແນວທາງ, ນະໂຍບາຍພາຍໃນ, ນະໂຍບາຍຕ່າງປະເທດ ແລະຊີ້ນຳທຸກການເຄື່ອນໄຫວຂອງພັກ, ລັດ ແລະປະຊາຊົນເຮົາ”(1). ເພິ່ນໄດ້ເນັ້ນໜັກວ່າ: “ຄຸນສົມບັດປະຕິວັດນັ້ນ ເປັນບັນຫາສຳຄັນທີ່ສຸດຂອງພະນັກງານ, ສະມາຊິກພັກທຸກຄົນ, ແຕ່ສຳລັບຖັນແຖວພະນັກງານຂັ້ນສູງແລ້ວຊ້ຳພັດຍິ່ງສຳຄັນກວ່ານັ້ນຫຼາຍເທົ່າ, ເພາະວ່າເຮົາເປັນສະມາຊິກຂອງກອງເສນາທິການຂອງພັກ, ອັນດີ ແລະອັນບໍ່ດີຂອງພວກເຮົາ ມັນລ້ວນແຕ່ສິ່ງຜົນສະທ້ອນອັນໃຫຍ່ຫຼວງເຖິງສະມາຊິກພັກ. ອັນດີກໍປຽບເໝືອນແສງສຸລິຍາສ່ອງເຍືອງໄປທົ່ວພິພົບ, ອັນບໍ່ດີກໍປຽບເໝືອນ

(1) ບົດບັນຍາຍ ຂອງປະທານ ໄກສອນ ພົມວິຫານ ວ່າດ້ວຍການຍົກສູງຄວາມສາມາດນຳພາ ແລະກຳລັງແຮງສູ້ຮົບຂອງພັກ ຕໍ່ຊຸດບຳລຸງທິດສະດີພິເສດ ໃຫ້ແກ່ພະນັກງານຂັ້ນສູງຂອງພັກ ແລະລັດ, ປີ 1985, ໜ້າ 28.

ຂີ້ເຜື້ອກ້ອນນ້ອຍໆຫຼາຍກ້ອນທີ່ເລື່ອນລອຍຢູ່ທ້ອງຟ້າ ມັນໄດ້ແຜ່ກະຈາຍເງົາຂອງມັນຢູ່ເທິງໜ້າດິນເຮັດໃຫ້ທ້ອງຟ້າມືດມົນ”[1]. ຍ້ອນແນວນັ້ນ, “ມາດຕະຖານອັນເປັນພື້ນຖານກ່ຽວກັບຄຸນສົມບັດ ແລະຄວາມສາມາດຂອງພະນັກງານນຳພາ ແລະຄຸ້ມຄອງກ່ອນອື່ນໝົດແມ່ນຄວາມບໍລິສຸດສັດຊື່ຕໍ່ປະເທດຊາດ, ຕໍ່ພັກ, ມີຄວາມເປັນເອກະພາບສູງກັບແນວທາງ, ນະໂຍບາຍ ແລະບັນດາທັດສະນະຂອງພັກ, ຄຳສັ່ງຕ່າງໆຂອງລັດໃນຂອບເຂດວຽກງານທີ່ຕົນເອງຮັບຜິດຊອບຢ່າງມີປະສິດທິຜົນ, ຮູ້ເຕົ້າໂຮມປຸກລະດົມ ແລະເສີມຂະຫຍາຍສະຕິປັນຍາຂອງມະຫາຊົນ, ມີສະຕິສູງຕໍ່ການຈັດຕັ້ງ ພ້ອມກັນນັ້ນ, ກໍຕ້ອງມີແບບແຜນວິທີເຮັດວຽກທີ່ຕິດແທດກັບຕົວຈິງ, ນັກຄົ້ນຄວ້າຮ່ຳຮຽນ, ເຝິກຝົນຫຼໍ່ຫຼອມຕົນເອງ, ມີຄຸນສົມບັດສິນທຳປະຕິວັດ ແລະຍົກລະດັບຄວາມຮູ້, ຄວາມສາມາດຂອງຕົນເອງຂຶ້ນຢ່າງບໍ່ຢຸດຢັ້ງ”[2]. ໃນໂຄງການການເມືອງກ່ຽວກັບທິດທາງນະໂຍບາຍພະນັກງານຂອງພັກ ປະທານ ໄກສອນ ພົມວິຫານ ເນັ້ນໜັກວ່າ: “ໃນສະເພາະໜ້ານີ້ຕ້ອງໄດ້ເອົາໃຈໃສ່ເພີ່ມທະວີການກໍ່ສ້າງ-ບຳລຸງພະນັກງານເກົ່າ ໄປຄຽງຄູ່ກັບການກໍ່ສ້າງ-ບຳລຸງພະນັກງານໜຸ່ມນ້ອຍ, ພະນັກງານຊົນເຜົ່າ, ແມ່ຍິງ, ພະນັກງານການເມືອງ, ພະນັກງານທິດສະດີ, ພະນັກງານທະຫານ, ພະນັກງານຮັບໃຊ້ຫ້ອງການກໍ່ສ້າງເຂດປົດປ່ອຍ, ວຽກງານແນວຫຼັງ ແລະວຽກງານການຕ່າງປະເທດ”[3].

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ປະທານ ໄກສອນ ພົມວິຫານ ໄດ້ເອົາໃຈໃສ່ຕໍ່ວຽກງານກໍ່ສ້າງ-ບຳລຸງຖັນແຖວພະນັກງານໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ທັງຮັບປະກັນໜ້າທີ່ການເມືອງຂອງພັກໃນແຕ່ລະໄລຍະ ເປັນຕົ້ນແມ່ນເອົາໃຈໃສ່ພະນັກງານການເມືອງ, ພະນັກງານຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ພະນັກງານເຕັກນິກວິທະຍາສາດ, ພະນັກງານເພດຍິງ, ຊົນເຜົ່າ, ຖືວຽກງານກໍ່ສ້າງ-ບຳລຸງພະນັກງານ ເປັນວຽກງານທີ່ຕ້ອງໄດ້ເຮັດຢ່າງເປັນປົກກະຕິ ຕໍ່ເນື່ອງ... 

ໃນການໂອ້ລົມຕໍ່ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 2 ສະໄໝທີ IV ປະທານ ໄກສອນ ພົມວິຫານ ໄດ້ເວົ້າເຖິງພະນັກງານການນຳວ່າ: “ຜູ້ນຳຕ້ອງເປັນແບບຢ່າງຮອບດ້ານ ເພື່ອໃຫ້ສະມາຊິກຜູ້ອື່ນເອົາເປັນແບບຢ່າງ”, “ສິ່ງທີ່ຄວນຫຼີກເວັ້ນແທ້ໃນຂົງເຂດຄຸນສົມບັດສິນທຳແມ່ນປາກຫວານດັ່ງນ້ຳອ້ອຍ, ໃຈສົ້ມດັ່ງໝາກນາວ, ຄວາມເວົ້າບໍ່ສອດຄ່ອງກັບການກະທຳ, ມີແຕ່ໂຄສະນາຄຸນສົມບັດສິນທຳແບບນ້ຳເຕົ້າເປົ່າ, ຕັກເຕືອນສັ່ງສອນຜູ້ອື່ນຕ້ອງເຮັດແບບນັ້ນແບບນີ້ ແຕ່ຕົນເອງຊ້ຳພັດບໍ່ເປັນແບບຢ່າງ”[4].

[1] ບົດບັນຍາຍຂອງປະທານ ໄກສອນ ພົມວິຫານ ວ່າດ້ວຍການຍົກສູງຄວາມສາມາດນຳພາ ແລະກຳລັງແຮງສູ້ຮົບຂອງພັກ ຕໍ່ຊຸດບຳລຸງທິດສະດີພິເສດໃຫ້ແກ່ພະນັກງານຂັ້ນສູງຂອງພັກ ແລະລັດ, ປີ 1985, ໜ້າ 30.

[2] ປຶ້ມຄຸນສົມບັດຂອງປະທານ ໄກສອນ ພົມວິຫານ, ປີ 1995, ໜ້າ 61.

[3] ໄກສອນ ພົມວິຫານ ນິພົນເລືອກເຟັ້ນເຫຼັ້ມ I, ສຳນັກພິມຈຳໜ່າຍ ສປປ ລາວ, ວຽງຈັນ, ປີ 1985, 167.

[4] ຄະນະຈັດຕັ້ງສູນກາງພັກ, ມູນເຊື້ອ 55 ປີກ່ຽວກັບວຽກງານຈັດຕັ້ງຂອງພັກ ປປ ລາວ, ປີ 2010, ໜ້າ 21.

ກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IV ເພິ່ນໄດ້ຕໍານິວ່າ: "ການບໍາລຸງພະນັກງານເວົ້າລວມແລ້ວແມ່ນຍັງເຮັດບໍ່ທັນໄດ້ດີ, ບໍ່ທັນມີແຜນການກໍານົດລວມທັງການກໍ່ສ້າງ-ບໍາລຸງຢູ່ພາຍໃນ ແລະຕ່າງປະເທດ, ການສ້າງພະນັກງານຍັງບໍ່ທັນຕິດພັນກັບພຶດຕິກໍາ ເຊິ່ງເຮັດໃຫ້ປະສິດທິຜົນຂອງວຽກງານມີການຈໍາກັດທາງດ້ານຄວາມຮູ້, ຄວາມສາມາດ, ການກໍານົດແນວທາງ, ແຜນນະໂຍບາຍຂອງພັກບໍ່ໜັກແໜ້ນ, ການຈັດຕັ້ງປະຕິບັດກໍຍັງອ່ອນ, ບໍ່ຄ່ອຍຕິດແທດຕົວຈິງ, ບໍ່ຕິດແທດມະຫາຊົນ, ຫ່າງເຫີນຈາກຮາກຖານ, ເຮັດໃຫ້ວຽກງານຜິວເຜີນພໍແລ້ວມື້ແລ້ວວັນ, ການຈັດວາງ, ນໍາໃຊ້ພະນັກງານເຮັດບໍ່ທັນໄດ້ດີ, ນໍາໃຊ້ບໍ່ຖືກຕາມວິຊາສະເພາະ, ສ່ວນຫຼາຍພະນັກງານວິຊາສະເພາະແມ່ນເຕົ້າໂຮມຢູ່ແຕ່ຂະແໜງການສູນກາງ, ສ່ວນຢູ່ທ້ອງຖິ່ນຕ່າງໆ ແລະຮາກຖານແມ່ນມີໜ້ອຍທີ່ສຸດ"(1). ໃນງານຊຸມນຸມມິດຕິງສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 35 ປີ ປະທານ ໄກສອນ ພົມວິຫານ ໄດ້ກ່າວວ່າ: "ຕ້ອງເອົາໃຈໃສ່ກໍ່ສ້າງ, ສຶກສາອົບຮົມພະນັກງານ, ສະມາຊິກໃນຂັ້ນຕ່າງໆ, ຂະແໜງການຕ່າງໆທາງດ້ານການເມືອງ-ແນວຄິດ, ຄວາມຮູ້, ຄວາມສາມາດ ແລະແບບແຜນວິທີເຮັດວຽກ. ບົດຮຽນ ແລະພຶດຕິກໍາຂອງພວກເຮົາ ຢັ້ງຢືນໃຫ້ເຫັນແຈ້ງແລ້ວວ່າແນວທາງ, ແຜນນະໂຍບາຍຂອງພັກ ຈະຖືກຕ້ອງປານໃດກໍດີ ຖ້າພະນັກງານສະມາຊິກພັກຫາກຂາດຄວາມຮູ້, ຄວາມສາມາດໃນດ້ານຕ່າງໆ ເພື່ອນໍາພາ ແລະຈັດຕັ້ງປະຕິບັດແລ້ວ ແນວທາງ, ນະໂຍບາຍດັ່ງກ່າວນັ້ນ ກໍຈະດີພຽງແຕ່ຢູ່ໃນໜ້າເຈ້ຍເທົ່ານັ້ນ"(2).

ຈາກບັນຫາດັ່ງກ່າວນັ້ນ, ເຫັນໄດ້ວ່າການກໍ່ສ້າງ-ບໍາລຸງພະນັກງານນໍາພາ-ຄຸ້ມຄອງ ເປັນປັດໄຈຕັດສິນທຸກວຽກງານຂອງພັກ ເຊິ່ງພັກເຮົາໄດ້ຖືວ່າການກໍ່ສ້າງ-ບໍາລຸງພະນັກງານນໍາພາ-ຄຸ້ມຄອງ ແມ່ນວຽກງານໜຶ່ງທີ່ມີຄວາມສໍາຄັນຫຼາຍ ແລະໄດ້ໝູນໃຊ້ແນວຄິດໄກສອນ ພົມວິຫານ ຕໍ່ກັບການກໍ່ສ້າງ-ບໍາລຸງພະນັກງານນໍາພາ-ຄຸ້ມຄອງ ເຂົ້າໃນວຽກງານຕົວຈິງ ສະແດງອອກໃນມະຕິກອງປະຊຸມໃຫຍ່ແຕ່ລະຄັ້ງໄດ້ກໍານົດຄາດໝາຍສູ້ຊົນສ້າງພະນັກງານນໍາພາຄຸ້ມຄອງໃຫ້ພຽງພໍກັບຄວາມຕ້ອງການຂອງການປະຕິບັດໜ້າທີ່ຍຸດທະສາດຂອງພັກ ກ່ອນອື່ນໝົດ "ຕ້ອງເພີ່ມທະວີວຽກງານກໍ່ສ້າງ ແລະເຝິກອົບຮົມພະນັກງານ, ສະມາຊິກພັກ ເພື່ອຕອບສະໜອງຄວາມຕ້ອງການຂອງໜ້າທີ່ການເມືອງໃນສະເພາະໜ້າ ແລະຍາວນານ ໂດຍສະເພາະແມ່ນການກໍ່ສ້າງຖັນແຖວພະນັກງານນໍາພາ, ພະນັກງານຫຼັກແຫຼ່ງຂັ້ນເມືອງ ແລະຢູ່ຮາກຖານ"(3). ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ ໄດ້ເນັ້ນໜັກວ່າ: "ຕ້ອງເຮັດໃຫ້ຖັນແຖວພະນັກງານນໍາພາຂັ້ນຍຸດທະສາດ, ພະນັກງານຫຼັກແຫຼ່ງແຕ່ລະຂັ້ນໄດ້ຮັບການປະກອບຄວາມຮູ້ລັດທິມາກ-ເລນິນ ທີ່ເປັນທິດສະດີພື້ນຖານກ່ຽວກັບການປະຕິວັດເວົ້າລວມ

(1) ຫັນໄປສູ່ຊົນນະບົດ ແລະເປີດກວ້າງການພົວພັນຕ່າງປະເທດປີ 1989 ກ່ຽວກັບວຽກງານພະນັກງານຂອງສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ຕໍ່ກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IV ໃນ ວັນທີ 30 ມັງກອນ ປີ 1989, ໜ້າ 186.

(2) ໄກສອນ ພົມວິຫານ ນິພົນເລືອກເຟັ້ນເຫຼັ້ມ 3, ໂຮງພິມແຫ່ງລັດ, ວຽງຈັນ,ປີ 1997, ໜ້າ358, 359.

(3) ເອກະສານອົບຮົມພະນັກງານການນໍາ ປະຈໍາປີ2000 , ພິມປີ 20, ໜ້າ 32.

ແລະແນວຄິດໄກສອນ ພົມວິຫານ ທີ່ເປັນຜົນແຫ່ງການຄົ້ນຄວ້າ, ໝູນໃຊ້ ແລະປະດິດສ້າງເຂົ້າໃນພຶດຕິກຳແຫ່ງການນຳພາ ພາລະກິດປະຕິວັດພັກເຮົາ"[1]. ເພື່ອປະຕິບັດຕາມແນວຄິດຊີ້ນຳຂອງພັກ ກໍຄືແນວຄິດໄກສອນ ພົມວິຫານໃນໄລຍະຜ່ານມາພັກເຮົາໄດ້ເອົາໃຈໃສ່ກໍ່ສ້າງ-ບຳລຸງພະນັກງານຂັ້ນນຳພາ-ຄຸ້ມຄອງຢູ່ສະຖາບັນການສຶກສາຂັ້ນຕ່າງໆ ສະແດງອອກໃນສົກປີ 2016-2020 "ໄດ້ສົ່ງພະນັກງານນຳພາ-ຄຸ້ມຄອງໄປກໍ່ສ້າງ ຢູ່ພາຍໃນແລະຕ່າງປະເທດທັງໝົດ 1.656 ສະຫາຍ, ຍິງ 378 ສະຫາຍ; ໃນນີ້, ຢູ່ພາຍໃນ ຈຳນວນ 1.203 ສະຫາຍ, ຍິງ 295 ສະຫາຍ ແລະຢູ່ຕ່າງປະເທດ ຈຳນວນ 453 ສະຫາຍ, ຍິງ 83 ສະຫາຍ; ສົກປີ 2022-2023 ສົ່ງໄປບຳລຸງຢູ່ພາຍໃນແລະຕ່າງປະເທດທັງໝົດ 2.491 ສະຫາຍ, ຍິງ 438 ສະຫາຍຄື: ສົ່ງໄປບຳລຸງຢູ່ພາຍໃນທັງໝົດ 872 ສະຫາຍ, ຍິງ 117 ສະຫາຍ; ໃນນັ້ນ, ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ຂັ້ນສູງລະບົບ 5 ເດືອນ ຈຳນວນ 536 ສະຫາຍ, ຍິງ 108 ສະຫາຍ, ໄປບຳລຸງວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບລະບົບ 64 ວັນ ຢູ່ວິທະຍາຄານປ້ອງກັນຊາດໄກສອນ ພົມວິຫານ ຈຳນວນ 171 ສະຫາຍ, ຍິງ 32 ສະຫາຍ, ໄປບຳລຸງພາສາອັງກິດ ລະບົບ 6 ເດືອນ ຢູ່ສະຖາບັນການຕ່າງປະເທດກະຊວງການຕ່າງປະເທດ 165 ສະຫາຍ, ຍິງ 37 ສະຫາຍ; ໄປບຳລຸງຢູ່ຕ່າງປະເທດທັງໝົດ 1.619 ສະຫາຍ, ຍິງ 261 ສະຫາຍ; ໃນນັ້ນ, ຢູ່ ສສ ຫວຽດນາມ ຈຳນວນ 112 ສະຫາຍ, ຍິງ 197 ສະຫາຍ, ຢູ່ ສປ ຈີນ ຈຳນວນ 960 ສະຫາຍ, ຍິງ 147 ສະຫາຍ"[2]. ສຳລັບປີ 2022 ໄດ້ສົ່ງພະນັກງານນຳພາ-ຄຸ້ມຄອງໄປກໍ່ສ້າງໄລຍະຍາວຢູ່ພາຍໃນ ແລະຕ່າງປະເທດທັງໝົດ "225 ສະຫາຍ, ຍິງ 54 ສະຫາຍ; ໃນນັ້ນ, ສົ່ງໄປຄົ້ນຄວ້າປະລິນຍາໂທຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ຈຳນວນ 140 ສະຫາຍ, ຍິງ 38 ສະຫາຍ; ສົ່ງໄປຍົກລະດັບຢູ່ຕ່າງປະເທດ (ສສ ຫວຽດນາມ) ທັງໝົດ 85 ສະຫາຍ; ໃນນັ້ນ, ລະບົບປະລິນຍາຕີ ຈຳນວນ 45 ສະຫາຍ, ຍິງ 8 ສະຫາຍ, ປະລິນຍາໂທ ຈຳນວນ 30 ສະຫາຍ, ຍິງ 6 ສະຫາຍ, ປະລິນຍາເອກ ຈຳນວນ 10 ສະຫາຍ, ຍິງ 2 ສະຫາຍ; ສົ່ງໄປບຳລຸງໄລຍະສັ້ນຢູ່ພາຍໃນ ແລະຕ່າງປະເທດທັງໝົດ 703 ສະຫາຍ, ຍິງ 118 ສະຫາຍ; ໃນນັ້ນ, ບຳລຸງທິດສະດີການເມືອງຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ຂັ້ນສູງລະບົບ 5 ເດືອນ ຈຳນວນ 112 ສະຫາຍ, ຍິງ 24 ສະຫາຍ ແລະຂັ້ນສູງລະບົບ 9 ເດືອນ ຈຳນວນ 60 ສະຫາຍ, ຍິງ 12 ສະຫາຍ ແລະເຝິກອົບຮົມຫົວຂໍ້ສະເພາະສຳລັບເລຂາພັກເມືອງ ລະບົບ 15 ວັນ ຈຳນວນ 50 ສະຫາຍ, ຍິງ 2 ສະຫາຍ, ບຳລຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ລະບົບ 64 ວັນ ຈຳນວນ 60 ສະຫາຍ, ຍິງ 10 ສະຫາຍ; ສົ່ງໄປບຳລຸງໄລຍະສັ້ນຢູ່ຕ່າງປະເທດທັງໝົດ 421 ສະຫາຍ, ຍິງ 70 ສະຫາຍຄື: ຢູ່ ສສ ຫວຽດນາມ ຈຳນວນ 168 ສະຫາຍ, ຍິງ 24 ສະຫາຍ"[3].

[1] ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 83.

[2] ບົດສະຫຼຸບການຈັດຕັ້ງວຽກງານນຳພາຮອບດ້ານຂອງກົມກໍ່ສ້າງພະນັກງານ ແຕ່ປີ 2016-2020 ແລະທິດທາງແຜນການ ແຕ່ປີ 2021-2025, ໜ້າ 5.

[3] ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພະນັກງານ ຂອງກົມກໍ່ສ້າງພະນັກງານ ປະຈຳປີ 2022 ແລະທິດທາງແຜນການ ປີ 2023, ໜ້າ 5.

ຄຽງຄູ່ກັບຜົນສຳເລັດໃນການກໍ່ສ້າງ-ບຳລຸງພະນັກງານຂັ້ນນຳພາຄຸ້ມຄອງໃນໄລຍະຜ່ານມາ ກໍເຫັນວ່າຍັງມີບາງດ້ານທີ່ຈະຕ້ອງໄດ້ປັບປຸງແກ້ໄຂ ໃນຕໍ່ໜ້າດັ່ງນີ້:

ໜຶ່ງ, ການຄົ້ນຄວ້າເຊື່ອມຊຶມ, ແນວຄິດໄກສອນ ພົມວິຫານ ຕໍ່ກັບການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ຍັງບໍ່ທັນຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນແຕ່ລະໄລຍະ, ພະນັກງານນຳພາ-ຄຸ້ມຄອງຈຳນວນໜຶ່ງ ຍັງບໍ່ທັນໜັກແໜ້ນທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມເສຍສະລະເພື່ອສ່ວນລວມ, ຄວາມເປັນແບບຢ່າງນຳໜ້າ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ.

ສອງ, ການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງບາງຂະແໜງການ-ທ້ອງຖິ່ນບໍ່ອີງໃສ່ແຜນກຳນົດພະນັກງານ, ການກໍ່ສ້າງພະນັກງານວິຊາການບໍ່ຕອບສະໜອງທັນກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ບາງຂະແໜງການ-ທ້ອງຖິ່ນບໍ່ທັນມີແຜນກໍ່ສ້າງ-ບຳລຸງພະນັກງານນຳພາຄຸ້ມຄອງ, ການເລືອກເຟັ້ນ, ຂຶ້ນແຜນກຳນົດເອົາພະນັກງານໄປຮຽນຕໍ່ຢູ່ພາຍໃນແລະຕ່າງປະເທດ ໃນແຕ່ລະກະຊວງ, ກົມກອງ, ຂະແໜງການ ເພື່ອສ້າງພະນັກງານສືບທອດປ່ຽນແທນຍັງບໍ່ທັນເຮັດຢ່າງເປັນລະບົບ.

ສາມ, ການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ຍັງບໍ່ທັນອີງໃສ່ມາດຕະຖານ ແລະເງື່ອນໄຂທີ່ກຳນົດໄວ. ສະນັ້ນ, ຈຶ່ງເຮັດໃຫ້ເກີດມີປາກົດການຫຍໍ້ທໍ້ຕ່າງໆຢູ່ພາຍໃນ, ເຮັດໃຫ້ພະນັກງານຈຳນວນໜຶ່ງບໍ່ມີຄວາມຫ້າວຫັນຕໍ່ກັບໜ້າທີ່ວຽກງານ, ເຮັດວຽກພໍແລ້ວມື້ແລ້ວວັນ.

ສີ່, ການສົ່ງພະນັກງານນຳພາ-ຄຸ້ມຄອງໄປກໍ່ສ້າງ-ບຳລຸງຢູ່ພາຍໃນ ແລະຕ່າງປະເທດມີຈຳນວນຫຼາຍແຕ່ຍັງຂາດການປະເມີນຜົນໄດ້ຮັບຈາກການປະຕິບັດໜ້າທີ່ວຽກງານຕົວຈິງ ຂອງບັນດາເປົ້າໝາຍທີ່ສົ່ງໄປກໍ່ສ້າງ-ບຳລຸງມາແລ້ວ.

ຫ້າ, ການສ້າງແຜນກໍ່ສ້າງ-ບຳລຸງພະນັກງານ ຍັງບໍ່ທັນຕິດພັນກັບແຜນກຳນົດພະນັກງານ, ພາໃຫ້ມີບາງຂົງເຂດເກີດປາກົດການທີ່ວ່າພະນັກງານເຫຼືອບໍ່ພໍ ແລະບໍ່ທັນມີນະໂຍບາຍເພື່ອກະຕຸກຊຸກຍູ້ຜູ້ຮຽນດີ, ຮຽນເກັ່ງ ເພື່ອສ້າງເປັນຊ່ຽວຊານສະເພາະດ້ານວິຊາສະເພາະຕ່າງໆ.

ເພື່ອເສີມຂະຫຍາຍການນຳພາ-ຊີ້ນຳຂອງປະທານ ໄກສອນ ພົມວິຫານ ໃຫ້ສອດຄ່ອງກັບສະພາບຈຸດພິເສດ ແລະຄວາມເປັນຈິງເພື່ອເຮັດໃຫ້ການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງມີຄຸນນະພາບ, ທັງສາມາດຕອບສະໜອງທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານວິຊາສະເພາະ ແລະທັງຮັບປະກັນໃຫ້ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບຕ່າງໆຕາມທັດສະນະຂອງຜູ້ຂຽນແລ້ວເຫັນວ່າຄວນເອົາໃຈໃສ່ຕື່ມບາງວຽກງານດັ່ງນີ້:

1). ກ່ອນອື່ນໝົດຕ້ອງເອົາໃຈໃສ່ເຝິກຝົນຫຼໍ່ຫຼອມພະນັກງານປະຕິວັດຮຸ່ນສືບທອດໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ ແລະແບບແຜນດຳລົງຊີວິດທີ່ປອດໃສຂາວສະອາດ, ບຳລຸງພະນັກງານໃຫ້ມີຄວາມຮູ້, ຄວາມສາມາດທາງດ້ານທິດສະດີມາກ-ເລນິນ ໃນລະດັບທີ່ແນ່ນອນ, ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານ ສ້າງໃຫ້ໄດ້ພະນັກງານໜຸ່ມນ້ອຍ

ທີ່ມີຄຸນສົມບັດສິນທຳປະຕິວັດທີ່ແທ້ຈິງ, ມີຄຸນທາດການເມືອງໜັກແໜ້ນ.

2). ຄະນະພັກແຕ່ລະຂັ້ນ ຕ້ອງຍຶດໝັ້ນຫຼັກການ-ທິດນຳ, ນິຕິກຳກ່ຽວກັບການຈັດຕັ້ງ, ກໍ່ສ້າງ-ບຳລຸງພະນັກງານຢ່າງເຂັ້ມງວດ, ຖືເປັນໜ້າທີ່ ແລະຄວາມຮັບຜິດຊອບໂດຍກົງຂອງຕົນ, ເອົາໃຈໃສ່ນຳພາ-ຊີ້ນຳ ອົງການເສນາທິການໃນການຈັດຕັ້ງປະຕິບັດຢ່າງຄົບຖ້ວນ.

3). ການກໍ່ສ້າງ-ບຳລຸງພະນັກງານຕ້ອງສຸມໃສ່ຍົກລະດັບຄຸນນະພາບ ແລະຄວາມສາມາດຂອງພະນັກງານໃຫ້ສູງຂຶ້ນທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່, ຕ້ອງສ້າງແຜນກຳນົດກ່ຽວກັບການສ້າງພະນັກງານໃນໄລຍະສັ້ນ ແລະໄລຍະຍາວ, ສົ່ງໄປຮຽນພາຍໃນ ແລະຕ່າງປະເທດ ແລະເຝິກຝົນຫຼໍ່ຫຼອມໃນຂະບວນການຕົວຈິງ ໃຫ້ຮັບປະກັນທາງດ້ານປະລິມານ ແລະຄຸນນະພາບ, ຮັບປະກັນກໍ່ສ້າງ-ບຳລຸງພະນັກງານໃຫ້ໄດ້ 3 ຮຸ່ນຄື: ພະນັກງານອາວຸໂສ, ພະນັກງານຮຸ່ນກາງ ແລະພະນັກງານຮຸ່ນໜຸ່ມ ແລະທັງຮັບປະກັນສາມປະເພດພະນັກງານຄື: ພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະພະນັກງານວິຊາການອື່ນໆ.

4). ການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ຕ້ອງອີງໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງຂອງໜ້າທີ່ວຽກງານໃນສະເພາະໜ້າ ແລະຍາວນານ. ໃນນັ້ນ, ຕ້ອງເອົາໃຈໃສ່ວຽກງານການສ້າງພະນັກງານຂັ້ນຍຸດທະສາດ ເອົາໃຈໃສ່ສ້າງພະນັກງານຊົນເຜົ່າ, ພະນັກງານເພດຍິງ ແລະພະນັກງານຮາກຖານ.

ສະຫຼຸບລວມແລ້ວ, ປະທານ ໄກສອນ ພົມວິຫານ ເປັນຜູ້ນຳພາທີ່ມີປີຊາສາມາດ, ເປັນນັກທິດສະດີ ແລະພຶດຕິກຳ, ເປັນນັກວາງແຜນຍຸດທະສາດ, ຍຸດໂທບາຍ ແລະວິທີປະຕິວັດທີ່ສະຫຼາດຄ່ອງແຄ້ວ, ມີແບບແຜນນຳພາ, ແບບແຜນເຮັດວຽກວິທະຍາສາດ ແມ່ນຜູ້ນຳທີ່ມີທັດສະນະມະຫາຊົນກວ້າງຂວາງ, ມີຄຸນສົມບັດສິນທຳອັນສູງສົ່ງ; ປອດໃສບໍລິສຸດ, ຊື່ສັດ ການເສີມຂະຫຍາຍຄຸນຄ່າແນວຄິດໄກສອນ ພົມວິຫານ ຕໍ່ກັບການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງແມ່ນຄວາມຮຽກຮ້ອງຕ້ອງການອັນຈຳເປັນເພື່ອເຮັດແນວໃດໃຫ້ພັກ-ລັດ ສາມາດຄົ້ນຄວ້າສ້າງໄດ້ພະນັກງານຫຼັກແຫຼ່ງ ແລະພະນັກງານສືບທອດປ່ຽນແທນໃນພາລະກິດປະຕິວັດອັນສະຫງ່າອົງອາດຂອງພັກຂອງຊາດ.

# ຍົກສູງບົດບາດການສິດສອນຂອງແມ່ຍິງ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ

ຂຽນໂດຍ: ປທ. ນ. ສຸດໃຈ ວົງພະຈັນ

ການສິດສອນໃນປັດຈຸບັນ, ຖືວ່າແມ່ນມີຄວາມສຳຄັນ ແລະຈຳເປັນຢ່າງຍິ່ງ ເພາະວ່າໃນຍຸກໂລກາພິວັດຍຸກແຫ່ງຂໍ້ມູນຂ່າວສານທີ່ໄຮ້ພົມແດນ ມັນຮຽກຮ້ອງໃຫ້ດ້ານການສິດສອນມີຄຸນນະພາບສູງຂຶ້ນ ສະແດງອອກຖ້າການສອນດີ, ສອນເກັ່ງ, ຖືກຕ້ອງຕາມມາດຕະຖານຫຼັກສູດແຫ່ງຊາດ ແລະສອດຄ່ອງກັບແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບຂອງລັດ, ກໍຈະສາມາດເຮັດໃຫ້ຜູ້ຮຽນຮັບຮູ້ໄດ້ວິທະຍາສາດເຕັກນິກ, ເຕັກໂນໂລຊີ, ມີຄວາມຮູ້, ຄວາມສາມາດສູງ ເຊິ່ງມີຜົນກະທົບຕໍ່ການພັດທະນາດ້ວຍຈັງຫວະໄວຂຶ້ນ ທຽມທັນກັບກະແສລວມຂອງການພັດທະນາໃນພາກພື້ນ ແລະໃນໂລກ. ພ້ອມກັນນັ້ນ, ການສຶກສາເປັນບັນທັດຖານວັດແທກໃນການພັດທະນາຄົນ ກໍຄືປະເທດຊາດ; ບໍ່ວ່າຈະຢູ່ໃນສັງຄົມໃດກໍຕາມ, ຖ້າພົນລະເມືອງ ກໍຄືບຸກຄະລາກອນທີ່ເປັນຜູ້ນຳມີການສຶກສາທີ່ສູງ, ມີຄວາມຮູ້, ຄວາມສາມາດ ກໍຈະພາປະເທດຊາດກ້າວຂຶ້ນຢ່າງບໍ່ຢຸດຢັ້ງ, ການສ້າງບຸກຄະລາກອນເປັນຜູ້ນຳທີ່ດີ ແລະເກັ່ງໄດ້ນັ້ນ ຕ້ອງປະກອບດ້ວຍຜູ້ທີ່ມີທັດສະນະຫຼັກໝັ້ນທາງດ້ານການເມືອງທີ່ໜັກແໜ້ນ, ມີຄຸນສົມບັດສົມທຳປະຕິວັດ, ແນວຄິດທິດສະດີທີ່ຖືກຕ້ອງ; ທັງໝົດນີ້, ຕ້ອງໄດ້ຜ່ານຫຼັກສູດການຮຽນການສອນຂອງລະບົບຮຽນຕ່າງໆ ເພື່ອຍົກສູງຄວາມຮູ້, ຄວາມສາມາດໃຫ້ສູງຂຶ້ນເລື້ອຍໆ.

ໃນໄລຍະຜ່ານມາ ພັກ-ລັດໄດ້ເອົາໃຈໃສ່ກໍ່ສ້າງ-ບຳລຸງພະນັກງານ-ລັດຖະກອນເວົ້າລວມ, ເວົ້າສະເພາະພະນັກງານເພດຍິງ, ດ້ວຍການສົ່ງໄປບຳລຸງທິດສະດີການເມືອງ-ການປົກຄອງ, ຍົກລະດັບຊາສະເພາະ.ປັດຈຸບັນມີພະນັກງານເພດຍິງທີ່ມີວຸດທິຕຳແໜ່ງຄູ (ສາດສະດາຈານ, ຮອງສາສະດາຈານ, ອາຈານ, ຜູ້ຊ່ວຍອາຈານ) ແລະວິຊາສະເພາະລະດັບປະລິນຍາເອກ, ປະລິນຍາໂທ, ປະລິນຍາຕີ ແລະລະດັບຕ່າງໆ ໄດ້ທາງດ້ານປະລິມານ ແລະຄຸນນະພາບຫຼາຍພໍສົມຄວນ ແລະສາມາດຕອບສະໜອງໃນດ້ານການສິດສອນໄດ້ຈຳນວນໜຶ່ງ. ພ້ອມກັນນັ້ນ, ກໍໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມການກໍ່ສ້າງພະນັກງານເພດຍິງເຂົ້າໃນຕຳແໜ່ງງານຕ່າງໆນັບແຕ່ຂັ້ນວິຊາການໄປເຖິງພະນັກງານນຳພາຫຼັກແຫຼ່ງຢູ່ໃນຂົງເຂດຂະແໜງການຕ່າງໆ. ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ກໍໄດ້ເວົ້າວ່າ: "ສະຫະພັນແມ່ຍິງລາວຕ້ອງເອົາໃຈໃສ່ສົ່ງເສີມ ແລະສ້າງເງື່ອນໄຂໃຫ້ແກ່ແມ່ຍິງໄດ້ພັດທະນາຕົນເອງໃນທຸກດ້ານ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຕົນເອງ ແລະຄອບຄົວສາມາດປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນ ກໍຄືພາລະກິດປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ, ສະຫະພັນແມ່ຍິງລາວທຸກຂັ້ນຕ້ອງປຸກລະດົມຂະບວນການແຂ່ງຂັນ 3 ດີ. ເປັນເຈົ້າການປະສານສົມທົບ

ກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງການກໍ່ສ້າງບຳລຸງ, ຍົກລະດັບພະນັກງານເພດຍິງໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ”[(1)]. ມາຮອດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກກໍ່ໄດ້ເອົາໃຈໃສ່ໃນການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະເພດຍິງວ່າ: “ສຸມໃສ່ພັດທະນາຊັບພະຍາກອນມະນຸດຢ່າງແຂງແຮງ, ໃນເງື່ອນໄຂໃໝ່ໃນການພັດທະນາຕ້ອງສ້າງໃຫ້ຄົນລາວໃຫ້ມີຄວາມພ້ອມໃນທຸກດ້ານ, ສາມາດກາຍເປັນກຳລັງຂັບດັນຕົ້ນຕໍໃຫ້ແກ່ການປົກປັກຮັກສາ ແລະພັດທະນາປະເທດຊາດ”[(2)].

ພັກເຮົາຖືວ່າແມ່ຍິງເປັນກຳລັງອັນໃຫຍ່ຫຼວງ, ເປັນກຳລັງແຮງຂອງສັງຄົມ, ແມ່ຍິງມີບົດບາດສຳຄັນໃນການປະກອບສ່ວນເຂົ້າໃນທຸກຂະບວນການວຽກງານຂອງສັງຄົມ ໂດຍສະເພາະແມ່ນບົດບາດສຳຄັນໃນການປະກອບສ່ວນເຂົ້າໃນຂະບວນການສິດສອນຂອງເອື້ອຍນ້ອງແມ່ຍິງຢູ່ສະຖາບັນການສຶກສາແຫ່ງຕ່າງໆໃນຂອບເຂດທົ່ວປະເທດ.

ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ຊື່ຫຍໍ້ (ສມປຊ) ແມ່ນສະຖາບັນກໍ່ສ້າງ ແລະບຳລຸງທາງດ້ານທິດສະດີການເມືອງ ແລະການປົກຄອງໃຫ້ແກ່ຜູ້ບໍລິຫານລະດັບກາງ ແລະລະດັບສູງໃນລະບົບການເມືອງຂອງ ສປປ ລາວ. ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດແມ່ນອົງການວິຊາການທີ່ຂຶ້ນກັບຄະນະບໍລິຫານງານສູນກາງພັກ ແລະລັດຖະບານ; ຢູ່ໃຕ້ການນຳພາ-ຊີ້ນຳໂດຍກົງຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ; ມີຖານະທຽບເທົ່າກັບບັນດາຄະນະຂອງພັກຂັ້ນສູນກາງ ແລະກະຊວງ-ອົງການຕ່າງໆຂອງລັດຖະບານ. ມີບົດບາດໃນການຄົ້ນຄວ້າທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອ ແລະປະຫວັດສາດຂອງພັກ, ຂອງຊາດ, ແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບຂອງລັດ, ວິທະຍາສາດການເມືອງ-ການປົກຄອງ; ວິທະຍາສາດການນຳພາຄຸ້ມຄອງ, ຮັບໃຊ້ການຮຽນ-ການສອນ, ສະໜອງຂໍ້ມູນດ້ານວິທະຍາສາດໃຫ້ແກ່ການວາງແນວທາງ, ນະໂຍບາຍຂອງພັກ-ລັດ, ມີບົດບາດໃນການບຳລຸງພະນັກງານນຳພາ-ຄຸ້ມຄອງຂັ້ນຍຸດທະສາດ ແລະການນຳຂັ້ນສູງ, ພະນັກງານນຳພາ-ຄຸ້ມຄອງ; ຍົກລະດັບທິດສະດີການເມືອງຂັ້ນຕົ້ນ, ຂັ້ນກາງ, ຂັ້ນສູງ ແລະກໍ່ສ້າງພະນັກງານຄົ້ນຄວ້າວິທະຍາສາດການເມືອງ-ການປົກຄອງ. “ປັດຈຸບັນສະຖາບັນການເມືອງ ແລະປົກຄອງແຫ່ງຊາດມີພະນັກງານ, ຄູ-ອາຈານທັງໝົດ 212 ທ່ານ, ຍິງ 94 ທ່ານ; ໃນນັ້ນ, ຄູ-ອາຈານ 69 ທ່ານ, ຍິງ 27 ທ່ານ (ຄູ-ອາຈານທີ່ທຽບຊັ້ນຂັ້ນເງິນເດືອນ ຕາມດຳລັດ 177), ພະນັກງານບໍລິຫານທີ່ເຮັດໜ້າທີ່ທັງສິດສອນ ແລະວຽກບໍລິຫານ ຈຳນວນ 143 ທ່ານ, ຍິງ 65 ທ່ານ. ດ້ານລະດັບວຸດທິທາງດ້ານວິທະຍາສາດ ຮອງສາດສະດາຈານ ຈຳນວນ 1 ທ່ານ, ປະລິນຍາເອກ 23 ທ່ານ, ຍິງ 9 ທ່ານ, ປະລິນຍາໂທ ຈຳນວນ 96 ທ່ານ, ຍິງ 29 ທ່ານ, ປະລິນຍາຕີ ຈຳນວນ 115 ທ່ານ, ຍິງ 55 ທ່ານ,ຊັ້ນສູງ ຈຳນວນ 2 ທ່ານ, ເປັນຊາຍ ແລະຊັ້ນກາງ ຈຳນວນ 2 ທ່ານ, ຍິງ 1 ທ່ານ ຊັ້ນຕົ້ນ 1 ເປັນຊາຍ”[(3)].

---

(1) ເອກະສານກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນ ປະຕິວັດລາວ, ປີ 2011, ໜ້າ 37.
(2) ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 10.
(3) ບົດສະຫຼຸບ ກົມຈັດຕັ້ງ-ພະນັກງານ ສມປຊ, ປີ 2024.

ເພື່ອເຮັດໃຫ້ເອື້ອຍນ້ອງແມ່ຍິງຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ໂດຍສະເພາະແມ່ນຄູ-ອາຈານແມ່ຍິງສູງຂຶ້ນຕື່ມເອື້ອຍນ້ອງແມ່ຍິງທີ່ເປັນອາຈານສອນຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ຈຶ່ງໄດ້ເອົາໃຈໃສ່ຍົກສູງຄຸນນະພາບໃນການສິດສອນ ຍ້ອນວ່າຄຸນນະພາບຂອງການສອນແມ່ນຄວາມສາມາດ, ຄວາມຊຳນິຊຳນານໃນການສົ່ງຄວາມຮູ້ ລວມໄປເຖິງການນຳໃຊ້ບັນດາເຄື່ອງມື,ອຸປະກອນ ແລະສື່ການສອນໃຫ້ໄດ້ຢ່າງຄ່ອງແຄ້ວ, ນິ້ມນວນ, ເພື່ອສາມາດບັນລຸເປົ້າໝາຍຂອງການສິດສອນໄດ້ໃນລະດັບສູງ. ຢາກປະຕິບັດຄືດັ່ງກ່າວຄູ-ອາຈານກໍຄືເພດຍິງ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ຕ້ອງກຳແໜ້ນຈຸດປະສົງຂອງແຕ່ລະຫຼັກສູດ ແລະດຳເນີນການສິດສອນໄປຕາມແຕ່ລະເນື້ອໃນຫຼັກສູດທີ່ໄດ້ກຳນົດໄວ້ໃຫ້ຄົບຖ້ວນ, ທຸກຂັ້ນຕອນໂດຍສອດຄ່ອງກັບຂໍ້ກຳນົດ ແລະລະບຽບການຮຽນ, ການສອບເສັງທີ່ໄດ້ກຳນົດໄວ້. ອີກດ້ານໜຶ່ງ, ຄູສອນຈະຕ້ອງໄດ້ຜ່ານວິຊາຄູເຊິ່ງວິຊາຄູແມ່ນຂະແໜງການວິທະຍາສາດໜຶ່ງໃນຂະບວນວິວັດການຮຽນຮູ້, ມັນຮຽກຮ້ອງຕ້ອງການໃຫ້ມີວິທີການສອນທີ່ດີ ແລະເປັນລະບົບຄົບຊຸດ, ໂດຍມີໂຄງການຫຼັກສູດ, ມີແຜນການຮຽນ-ການສອນ, ຕ້ອງປະຕິບັດໃຫ້ຖືກຕາມຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນ, ຮູບການ ແລະວິທີການທີ່ສອດຄ່ອງແຕ່ລະບາດກ້າວ ແລະຂັ້ນຕອນທີ່ໄດ້ກຳນົດໄວ້ໃນແຕ່ລະໂຄງການຫຼັກສູດ ແລະໃຫ້ໄປຕາມມາດຕະຖານຫຼັກສູດແຫ່ງຊາດ, ໃນພາກພື້ນ ແລະສາກົນ. ດັ່ງຄຳເວົ້າ ຂອງປະທານ ໂຮ່ຈິມິນທີ່ວ່າ: "ການສອນກໍຄືການຮຽນຕ້ອງຮຽນຮູ້ຖືເປັນສຳຄັນທັງຄວາມສາມາດ ແລະຄຸນສົມບັດປະຕິວັດ ນັ້ນແມ່ນກົກເຫງົ້າ, ສຳຄັນທີ່ສຸດ, ຖ້າບໍ່ມີຄຸນສົມບັດປະຕິວັດ, ມີແຕ່ຄວາມສາມາດກໍໃຊ້ໄຮ້ປະໂຫຍດ, ຄຸນສົມບັດປະຕິວັດແມ່ນຄວາມຈົງຮັກພັກດີຕໍ່ການປະຕິວັດ, ຮັບໃຊ້ປະຊາຊົນຢ່າງສຸດໃຈ"(1). ສະນັ້ນ, ການສິດສອນຕ້ອງຮັບປະກັນໃຫ້ສອນດີ, ຮຽນດີ, ຄຸ້ມຄອງດີ.

ໃນໄລຍະຜ່ານມາຄູ-ອາຈານ ແມ່ຍິງຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໄດ້ພະຍາຍາມສຸມທຸກສະຕິປັນຍາເອົາໃຈໃສ່ໃນການສອນໃຫ້ໄດ້ທັງປະລິມານ ແລະຄຸນນະພາບເພື່ອສົ່ງຄວາມຮູ້, ໃຫ້ຜູ້ຮຽນກໍຄືນັກສຶກສາແຕ່ລະຮຸ່ນເຊິ່ງສະແດງອອກດັ່ງນີ້:

1). ການຄົ້ນຄວ້າແຕ່ງບົດສອນ: ເອົາໃຈໃສ່ຄົ້ນຄວ້າແຕ່ງບົດສອນຂອງຕົນເປັນຢ່າງດີ ສະແດງອອກ "ໃນໄລຍະປີ 2019-2023 ເອື້ອຍນ້ອງແມ່ຍິງທີ່ເປັນຄູ-ອາຈານຄົ້ນຄວ້າແຕ່ງບົດສອນໄດ້ທັງໝົດ 1.140 ບົດ. ນອກຈາກນັ້ນ, ເອື້ອຍນ້ອງແມ່ຍິງຍັງໄດ້ປະກອບສ່ວນຂຽນບົດວິທະຍາສາດໄດ້ທັງໝົດ 96 ຫົວຂໍ້ ແລະບົດວາລະສານໄດ້ທັງໝົດ 160 ບົດ ແລະແນະນຳບົດຂຽນບົດວິທະຍານິພົນຢູ່ພາຍໃນ ແລະນອກສະຖາບັນໄດ້ທັງໝົດ 390 ບົດ. ປະກອບສ່ວນຂຽນປຶ້ມຫຼັກສູດ 3 ຂັ້ນຄື: ຂັ້ນຕົ້ນສຳເລັດ 10 ວິຊາ, ຂັ້ນກາງສຳເລັດ 9 ວິຊາ, ຂັ້ນສູງສຳເລັດ 15 ວິຊາ; ປະກອບສ່ວນຂຽນປຶ້ມ, ຕຳລາ, ເອກະສານຮັບໃຊ້ການຮຽນ-ການສອນສຳເລັດ 18 ວິຊາ"(2)

2). ການຂຶ້ນຫ້ອງສິດສອນ, ສຳມະນາ

(1) ບົດສະຫຼຸບ ກົມຈັດຕັ້ງ-ພະນັກງານ ສມປຊ, ປີ 2023.

(2) ບົດສະຫຼຸບການຈັດຕັ້ງເຄື່ອນໄຫວວຽກງານແມ່ຍິງຂອງແຕ່ລະຮາກຖານ ພາຍໃນສະຖາບັນ, ໄລຍະປີ 2019-2023.

ແລະແກ້ຂໍ້ຂ້ອງໃຈ: ບັນດາຄູ-ອາຈານແມ່ຍິງ, ສ່ວນຫຼາຍລ້ວນແຕ່ເປັນຜູ້ທີ່ມີຄຸນວຸດທິການສຶກສາສູງ, ມີລະດັບທາງດ້ານທິດສະດີ ແລະ ວິຊາສະເພາະອັນແນ່ນອນ, ເປັນຜູ້ທີ່ມີປະສົບການໃນການຂຶ້ນຫ້ອງສິດສອນ ແລະມີຄວາມຮັບຜິດຊອບສູງຕໍ່ການຖ່າຍທອດຄວາມຮູ້ໃຫ້ແກ່ນັກສຶກສາໄດ້ເປັນຢ່າງດີ, ເອົາໃຈໃສ່ຕໍ່ການປະຕິບັດໂມງເວລາໃນການຂຶ້ນຫ້ອງສິດສອນ, ການສໍາມະນາ ແລະແກ້ຂໍ້ຂ້ອງໃຈຢ່າງເຂັ້ມງວດ. ຄຽງຄູ່ກັນນັ້ນ, ວິທີການສິດສອນ, ການສໍາມະນາ, ແກ້ຂໍ້ຂ້ອງໃຈກໍປະຕິບັດຕາມລະບົບການສຶກສາແຫ່ງຊາດ ໂດຍມີການວາງແຜນການ ແລະກະກຽມບົດສອນລ່ວງໜ້າ. ໄລຍະປີ 2019-2023 ຄູ-ອາຈານແມ່ຍິງສາມາດປະກອບສ່ວນຄວາມຮູ້, ຄວາມສາມາດເຂົ້າໃນການສິດສອນ, ສໍາມະນາ, ແກ້ຂໍ້ຂ້ອງໃຈ ແລະ ຈັດຕັ້ງປະຕິບັດຊົ່ວໂມງທັງພາຍໃນ ແລະນອກສະຖາບັນໄດ້ທັງໝົດ 40.113 ຊົ່ວໂມງ”[(1)] ນັ້ນສະແດງໃຫ້ເຫັນວ່າຜົນງານການຂຶ້ນຫ້ອງສິດສອນ, ສໍາມະນາ ແລະແກ້ຂໍ້ຂ້ອງໃຈຂອງເອື້ອຍນ້ອງແມ່ຍິງຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດນັບມື້ມີຄຸນນະພາບ ແລະ ສາມາດຍົກສູງບົດບາດໄດ້ເທົ່າທຽມກັບເພດຊາຍ.

3). ການເປັນກໍາມະການສອບເສັງ, ການກວດບົດ, ການປ້ອງກັນບົດຈົບຊັ້ນ: ໃນໄລຍະປີ 2019-2023 ເອື້ອຍນ້ອງແມ່ຍິງສະຖາບັນໄດ້ປະກອບສ່ວນເຂົ້າເປັນກໍາມະການສອບເສັງສະເລ່ຍໄດ້ທັງໝົດ 314 ຄັ້ງ, ກວດບົດສະເລ່ຍໄດ້ 5.890 ກວ່າບົດ; ເປັນກໍາມະການປ້ອງກັນບົດຈົບຊັ້ນ ສະເລ່ຍໄດ້ 1.110 ຄັ້ງ. ເປັນກໍາມະການສອບເສັງ, ກວດບົດ ແລະປ້ອງກັນບົດຈົບຊັ້ນຂອງນັກສຶກສາ, ເອື້ອຍນ້ອງແມ່ຍິງ ທີ່ເຮັດໜ້າທີ່ເປັນຄູ-ອາຈານໄດ້ເອົາໃຈໃສ່ຕີລາຄາປະເມີນຜົນຢ່າງກົງໄປກົງມາຢ່າງພາວະວິໄສ ແລະຖືກຕ້ອງຕາມສະພາບຄວາມເປັນຈິງຂອງບົດຕ່າງໆນັ້ນ ທີ່ນັກສຶກສາໄດ້ຄົ້ນຄວ້າຂຽນ, ຕອບຄໍາຖາມ ແລະອື່ນໆ ເຊິ່ງສະແດງໃຫ້ເຫັນຜົນການປະເມີນນັກສຶກສາປີສຸດທ້າຍໄດ້ດີພໍສົມຄວນ.

4). ການເຄື່ອນໄຫວທັດສະນະແລກປ່ຽນບົດຮຽນ ແລະການກໍ່ສ້າງຮາກຖານການເມືອງ: ໂດຍປະຕິບັດຕາມການມອບໝາຍເອື້ອຍນ້ອງແມ່ຍິງ ກໍໄດ້ເອົາໃຈໃສ່ນໍາພາ-ຊີ້ນໍານັກສຶກສາລົງເຄື່ອນໄຫວເກັບກໍາຂໍ້ມູນ ແລະຖອດຖອນບົດຮຽນທີ່ດີ ເພື່ອນໍາມາສົມທຽບ ແລະໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ແລະ ການສິດສອນຂອງຕົນໃຫ້ສອດຄ່ອງ ແລະມີວິທະຍາສາດ, ສາມາດເຮັດໃຫ້ເອື້ອຍນ້ອງແມ່ຍິງຮັບຮູ້, ກໍາແໜ້ນ, ຮູ້ວິທີເກັບກໍາ, ວິໄຈ ແລະ ສັງລວມຂໍ້ມູນຕ່າງໆທີ່ຈໍາເປັນຢູ່ທ້ອງຖິ່ນ.“ໄລຍະ 5 ປີ (2019-2023) ເອື້ອນ້ອງແມ່ຍິງປະກອບສ່ວນທາງດ້ານເຫື່ອແຮງ ແລະສະຕິປັນຍາໃນການເຄື່ອນໄຫວແລກປ່ຽນບົດຮຽນຢູ່ນະຄອນຫຼວງວຽງຈັນໄດ້ 42 ຄັ້ງ, ຢູ່ຕ່າງແຂວງໄດ້ 37 ຄັ້ງ ແລະລົງກໍ່ສ້າງຮາກຖານການເມືອງໄດ້ 5 ຄັ້ງ”[(1)].

ຄຽງຄູ່ກັບຜົນສໍາເລັດທີ່ກ່າວມານັ້ນ, ກໍຍັງມີບັນຫາຕັ້ງຂຶ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂ ເພື່ອຍົກສູງບົດບາດການສິດສອນຂອງຄູ-ອາຈານແມ່ຍິງໃຫ້ສູງຂຶ້ນກວ່າເກົ່າດັ່ງນີ້:

---

[(1)] ບົດສະຫຼຸບການຈັດຕັ້ງເຄື່ອນໄຫວວຽກງານແມ່ຍິງຂອງແຕ່ລະຮາກຖານ ພາຍໃນສະຖາບັນ, ໄລຍະປີ 2019-2023.

1). ການນຳເອົາແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບຂອງລັດນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການສິດສອນ ຍັງບໍ່ທັນເລິກເຊິ່ງ; ການຄົ້ນຄວ້າແຕ່ງບົດສອນຂອງເອື້ອຍນ້ອງແມ່ຍິງຈຳນວນໜຶ່ງດ້ານຄວາມຮັບຮູ້, ເຂົ້າໃຈທາງດ້ານທິດສະດີ ແລະວິຊາສະເພາະຍັງບໍ່ທັນກຳແໜ້ນ ແລະເລິກເຊິ່ງເທົ່າທີ່ຄວນ; ຄວາມຊຳນານໃນການຄົ້ນຄວ້າ, ການໄຈ້ແຍກບັນຫາ ຫຼື ປະດິດສ້າງໃນຂະແໜງການຂອງຕົນເອງໄດ້ສຶກສາຮ່ຳຮຽນ, ຄວາມຮູ້ທີ່ຍາດມາໄດ້ນັ້ນຍັງບໍ່ທັນຕອບສະໜອງຄວາມຕ້ອງການຂອງການຈັດຕັ້ງມອບໝາຍໃຫ້ເຊັ່ນ: ຄວາມຮູ້, ຄວາມສາມາດໃນການແຕ່ງບົດສອນ, ການຄົ້ນຄວ້າຂຽນບົດວິທະຍາສາດ, ການຂຽນບົດລົງວາລະສານ ຍັງບໍ່ທັນຫຼາກຫຼາຍ ແລະບໍ່ທັນຮັບປະກັນລັກສະນະວິທະຍາສາດ.

2). ການຂຶ້ນຫ້ອງສິດສອນ, ສຳມະນາ ແລະແກ້ຂໍ້ຂ້ອງໃຈ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ; ການພັດທະນາການສິດສອນຂອງເອື້ອຍນ້ອງແມ່ຍິງຍັງບໍ່ທັນພົ້ນເດັ່ນເທົ່າທີ່ຄວນ; ການອະທິບາຍບົດຮຽນ ແລະຍົກຕົວຢ່າງພຶດຕິກຳສົມທຽບທິດສະດີຍັງມີຈຳກັດ. ອີກດ້ານໜຶ່ງເປົ້າໝາຍຜູ້ເຂົ້າຮຽນມີລະດັບຄວາມຮູ້ສູງ, ມີລະດັບຕຳແໜ່ງບໍລິຫານ ປະເພດ 5 ຫາ 1. ສະນັ້ນ, ເອື້ອຍນ້ອງແມ່ຍິງຈຳນວນໜຶ່ງມາດຕະຖານເງື່ອນໄຂຍັງບໍ່ທັນຄົບຖ້ວນ ເປັນຕົ້ນແມ່ນລະດັບທິດສະດີການເມືອງ ແລະວິຊາສະເພາະ. ດັ່ງນັ້ນ, ເມື່ອທຽບກັບຄວາມຮຽກຮ້ອງຕ້ອງການທີ່ສູງກວ່າເຫັນວ່າຍັງຈະຕ້ອງໄດ້ເອົາໃຈໃສ່ກໍ່ສ້າງ-ບຳລຸງແມ່ຍິງໃຫ້ໄດ້ທັງປະລິມານ ແລະຄຸນນະພາບ.

3). ການເປັນກຳມະການສອບເສັງ, ການກວດບົດ, ການປ້ອງກັນບົດຈົບຊັ້ນ ຍັງບໍ່ທັນພົ້ນເດັ່ນ; ຍັງມີເອື້ອຍນ້ອງຈຳນວນໜຶ່ງ ລະດັບຄວາມຮັບຮູ້, ບົດຮຽນ, ປະສົບການ ຍັງບໍ່ທັນສູງ ແລະມາດຕະຖານເງື່ອນໄຂຍັງບໍ່ທັນຄົບຖ້ວນ. ສະນັ້ນ, ຈຶ່ງເຮັດໃຫ້ເອື້ອຍນ້ອງຈຳນວນໜຶ່ງບໍ່ສາມາດເຂົ້າຮ່ວມເປັນກຳມະການສອບເສັງ, ການກວດບົດ, ການປ້ອງກັນບົດຈົບຊັ້ນໄດ້.

4). ການເຄື່ອນໄຫວທັດສະນະແລກປ່ຽນບົດຮຽນ ແລະການກໍ່ສ້າງຮາກຖານການເມືອງເຫັນວ່າ ຍັງມີເອື້ອຍນ້ອງຈຳນວນໜຶ່ງ ບໍ່ທັນກຳແໜ້ນ, ຄວາມຮັບຮູ້ ແລະເຂົ້າໃຈຕໍ່ວຽກງານລົງກໍ່ຮາກຖານການເມືອງ, ການໄປແລກປ່ຽນບົດຮຽນ ເພື່ອຍາດແຍ່ງເອົາພຶດຕິກຳຕົວຈິງຢູ່ທ້ອງຖິ່ນຮາກຖານນຳມາສົມທຽບໃສ່ທິດສະດີ ທີ່ຕົນເອງໄດ້ຮຽນມາ ຫຼື ປະກອບເຂົ້າໃນການແຕ່ງບົດສອນ, ການຂຶ້ນຫ້ອງສິດສອນ ແລະອື່ນໆ, ຜ່ານມາ ເຫັນວ່າຍັງຖືເບົາ ຍັງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນ

ເພື່ອຍົກສູງບົດບາດຂອງແມ່ຍິງຢູ່ ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ໃຫ້ສູງຂຶ້ນ ແລະທຽບເທົ່າກັບເພດຊາຍໃຫ້ນັບມື້ຫຼາຍຂຶ້ນ ໃນຕໍ່ໜ້າຈະຕ້ອງໄດ້ເອົາໃຈໃສ່ຄື:

ໜຶ່ງ, ເອົາໃຈໃສ່ກຳແໜ້ນ ແລະຈັດຕັ້ງຜັນຂະຫຍາຍພື້ນຖານຫຼັກມູນທິດສະດີ, ແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບຂອງລັດເຂົ້າໃນການສິດສອນໃຫ້ເລິກ

(1) ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຂອງກົມຄຸ້ມຄອງການຮຽນ-ການສອນ, ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ນັບແຕ່ປີ 2019-2023.

ເຊິ່ງ ແລະຖືກຕ້ອງສອດຄ່ອງ. ພັດທະນາແມ່ຍິງ ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ໃຫ້ມີລະດັບຄວາມຮູ້, ຄວາມສາມາດທາງດ້ານທິດສະດີການເມືອງ-ການປົກຄອງ ແລະ ຍົກລະດັບວິຊາສະເພາະໃຫ້ນັບມື້ສູງຂຶ້ນເລື້ອຍໆ ແລະສົມຄູ່ກັບຄວາມຮຽກຮ້ອງຕ້ອງການໃນການພັດທະນາປະເທດແຕ່ລະໄລຍະ.

ສອງ, ຍົກສູງບົດບາດແມ່ຍິງ ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ໃນການປະກອບສ່ວນເຂົ້າໃນການສິດສອນ ໃຫ້ພົ້ນເດັ່ນ ແລະໃຫ້ເທົ່າທຽມກັບເພດຊາຍ. ໂດຍການສົ່ງເສີມໃຫ້ເອື້ອຍນ້ອງແມ່ຍິງໄດ້ເຂົ້າເຖິງໂອກາດໃນການເຂົ້າເປັນສະມາຊິກພັກສົມບູນ ແລະໃຫ້ຄົບມາດຕະຖານເງື່ອນໄຂ, ຈາກນັ້ນສົ່ງໄປຍົກລະດັບທາງດ້ານທິດສະດີການເມືອງ 3 ຂັ້ນ ແລະລະດັບວິຊາສະເພາະ ລະດັບປະລິນຍາໂທ ແລະປະລິນຍາເອກ; ສົ່ງໄປເຝິກອົບຮົມທາງດ້ານພາສາຕ່າງປະເທດ, ສົ່ງເສີມໃຫ້ເອື້ອຍນ້ອງແມ່ຍິງໄດ້ເຂົ້າເຖິງການພັດທະນາທາງດ້ານເຕັກໂນໂລຊີທີ່ທັນສະໄໝ ແລະອື່ນໆ.

ສາມ, ເອົາໃຈໃສ່ຄົ້ນຄວ້າພື້ນຖານທິດສະດີ ແລະພຶດຕິກຳໃຫ້ເລິກເຊິ່ງ ໂດຍສະເພາະແມ່ນທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະທິດສະດີທີ່ກ້າວໜ້າ; ພ້ອມກັນນັ້ນ, ກໍຕ້ອງສຶກສາຄົ້ນຄວ້າຊອກຮູ້ຂໍ້ມູນ, ສິ່ງໃໝ່ໆໃຫ້ທຽບທັນກັບຍຸກສະໄໝຂອງການປະຕິວັດອຸດສາຫະກຳ 4.0 ພ້ອມທັງນຳມາໝູນໃຊ້ເຂົ້າໃນການສິດສອນຢ່າງມີວິທະຍາສາດ ແລະຮັບປະກັນຄຸນນະພາບໃຫ້ສູງຂຶ້ນກວ່າເກົ່າ.

ສີ່, ເພື່ອຍົກສູງຄວາມຮູ້ ແລະຄວາມສາມາດຂອງເອື້ອຍນ້ອງແມ່ຍິງໃຫ້ສູງຂຶ້ນ ຄວນເອົາໃຈໃສ່ໃນການເຄື່ອນໄຫວທັດສະນະແລກປ່ຽນບົດຮຽນ ແລະລົງກໍ່ສ້າງຮາກຖານການເມືອງໃຫ້ມີປະສິດທິພາບ ແລະມີປະສິດທິຜົນສູງຂຶ້ນກວ່າເກົ່າ; ພ້ອມນັ້ນ, ກໍຄວນສ້າງຄວາມຮັບຮູ້ ແລະເຂົ້າໃຈຕໍ່ວຽກງານລົງກໍ່ຮາກຖານການເມືອງ, ການໄປແລກປ່ຽນບົດຮຽນ ເພື່ອຍາດແຍ່ງເອົາພຶດຕິກຳຕົວຈິງຢູ່ທ້ອງຖິ່ນຮາກຖານນຳມາສົມທຽບໃສ່ທິດສະດີທີ່ຕົນເອງໄດ້ຮຽນມາ ຫຼື ປະກອບເຂົ້າໃນການແຕ່ງບົດສອນ, ການຂຶ້ນຫ້ອງສິດສອນໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ.

ສັງລວມແລ້ວ, ການສິດສອນຂອງເອື້ອຍນ້ອງແມ່ຍິງ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ໄດ້ສະແດງໃຫ້ເຫັນການເຄື່ອນໄຫວວຽກງານຢ່າງເປັນລະບົບຄົບຊຸດ ເພື່ອຖ່າຍທອດຄວາມຮູ້ຂອງຜູ້ທີ່ມີພື້ນຖານດ້ານທິດສະດີ, ວິຊາສະເພາະຂະແໜງການໃດໜຶ່ງ ພ້ອມທັງມີບົດຮຽນ, ພຶດຕິກຳຂອງວຽກງານນັ້ນໆໄປສູ່ຄົນອື່ນ ເພື່ອນຳເອົາບົດຮຽນທີ່ຕົນໄດ້ຮຽນຮູ້ ຫຼື ປະສົບການທີ່ຕົນໄດ້ສະສົມຈາກພຶດຕິກຳຕົວຈິງນຳໄປຖ່າຍທອດໃຫ້ຄົນອື່ນອີກກຸ່ມໜຶ່ງໄດ້ຮັບຮູ້, ເຂົ້າໃຈ ແລະສາມາດປະຕິບັດຕາມ ໂດຍການນຳໃຊ້ບັນດາວິທີການ, ມາດຕະການ, ບາດກ້າວ ແລະອຸປະກອນຕ່າງໆເຂົ້າໃນການສອນຢ່າງເໝາະສົມ ເພື່ອເຮັດໃຫ້ການສິດສອນດຳເນີນໄປຢ່າງມີວິທະຍາສາດ. ສະນັ້ນ, ຕ້ອງໄດ້ຍົກສູງບົດບາດການສິດສອນຂອງແມ່ຍິງຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໃຫ້ສູງຂຶ້ນ ສາມາດທຽບເທົ່າກັບເພດຊາຍ.

# ຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ໃຫ້ພະນັກງານ, ສະມາຊິກພັກ ຢູ່ພະແນກການຕ່າງປະເທດ ແຂວງຜົ້ງສາລີ ໃນໄລຍະໃໝ່

ຂຽນໂດຍ: ສົມຈະເລີນ ວິລະວົງ

“ພະນັກງານແມ່ນປັດໄຈຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ ແລະວຽກງານພະນັກງານແມ່ນຂໍກຸນແຈສໍາຄັນໃນຂະບວນວິວັດການຈັດຕັ້ງປະຕິບັດບົດບາດການນໍາພາຂອງພັກຕໍ່ພາລະກິດປະຕິວັດ”[(1)]. ສະນັ້ນ, ການຍົກສູງຄຸນທາດການເມືອງໃນຖັນແຖວພະນັກງານສະມາຊິກພັກແມ່ນວຽກງານກົກຂອງພັກ, ແມ່ນວິທີປະຕິບັດ, ທັງແມ່ນສະໜາມຮົບທີ່ສໍາຄັນທີ່ສຸດໃນການນໍາພາຂອງພັກ; ພັກໄດ້ຖືເອົາວຽກງານດັ່ງກ່າວປຽບເໝືອນເສັ້ນໄໝແດງທີ່ສອດຮ້ອຍໄປໃນທຸກຂົງເຂດວຽກງານ ຍ້ອນວ່າວຽກງານຍົກສູງຄຸນທາດການເມືອງ ແມ່ນວຽກງານໜຶ່ງທີ່ພົວພັນກັບຄົນໂດຍກົງ ເພື່ອສ້າງຄວາມເຂັ້ມແຂງໃນການປະຕິບັດວຽກງານ; ສະນັ້ນ, ການຍົກສູງທັດສະນະຫຼັກໝັ້ນທາງດ້ານການເມືອງ-ແນວຄິດໃຫ້ຖັນແຖວພະນັກງານ, ສະມາຊິກພັກໃຫ້ມີຄວາມໜັກແໜ້ນ, ຮູ້ຈໍາແນກມິດ ແລະສັດຕູຈະແຈ້ງ, ຍຶດໝັ້ນອຸດົມການສັງຄົມນິຍົມ, ສັດຊື່ບໍລິສຸດຕໍ່ພັກ ແລະປະເທດຊາດແມ່ນຄວາມຈໍາເປັນພາວະວິໄສຂອງພັກເຮົາໃນແຕ່ລະໄລຍະ ໂດຍສະເພາະແມ່ນໃນເງື່ອນໄຂໃໝ່ທີ່ພັກເຮົາສືບຕໍ່ນໍາພາປະເທດຊາດປະຕິບັດພາລະກິດປ່ຽນແປງໃໝ່ ເພື່ອກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມໃນທ່າມກາງສະພາບການຂອງພາກພື້ນ ແລະສາກົນມີຄວາມສະຫຼັບສັບຊ້ອນຫຼາຍຢ່າງທີ່ກະທົບຕໍ່ຄວາມໝັ້ນຄົງຂອງພັກ, ຂອງລະບອບໃໝ່ລະບອບປະຊາທິປະໄຕ ປະຊາຊົນ ຈຶ່ງມີຄວາມຈໍາເປັນທີ່ສຸດຕ້ອງໄດ້ຍົກສູງຄຸນທາດການເມືອງ ແລະຄຸນສົມບັດສິນທໍາປະຕິວັດໃຫ້ແກ່ຖັນແຖວພະນັກງານທຸກປະເພດ. ພັກເຮົາໄດ້ຢັ້ງຢືນວ່າ: “ການເຝິກຝົນຫຼໍ່ຫຼອມທາງດ້ານການເມືອງ, ຄຸນສົມບັດສິນທໍາປະຕິວັດ ແລະຄວາມເປັນແບບຢ່າງນໍາໜ້າຂອງສະມາຊິກພັກແມ່ນຄວາມຮຽກຮ້ອງຕ້ອງການອັນຈໍາເປັນ ແລະຮີບດ່ວນຂອງພັກເຮົາ ເພື່ອສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ”[(2)]. ສະນັ້ນ, ໃນເງື່ອນໄຂໃໝ່ຂອງການປະຕິວັດນີ້, ພັກເຮົາໄດ້ເລັ່ງທວງໃຫ້ຖັນແຖວພະນັກງານ-ສະມາຊິກພັກທຸກສະຫາຍຕ້ອງມີຄຸນທາດການເມືອງ, ມີຄຸນສົມບັດສິນທໍາປະຕິວັດກໍຄືພະນັກງານ-ສະມາຊິກພັກຕ້ອງມີທັດສະນະຫຼັກໝັ້ນຊົນຊັ້ນ, ຈໍາແນກມິດ-ສັດຕູ ແລະເດັດດ່ຽວໜຽວແໜ້ນຕໍ່ອຸດົມການຂອງພັກປະຊາຊົນ ປະຕິວັດລາວ, ບໍ່ມີແນວຄິດຫຼາຍພັກຫຼາຍເຄົ້າ, ຍາມໃດກໍມີຄວາມຕື່ນຕົວເປັນເຈົ້າການຮັບໃຊ້ປະເທດຊາດ ແລະປະຊາຊົນດ້ວຍຄວາມສັດຊື່ບໍລິສຸດ; ຄຸນສົມບັດປະຕິວັດແມ່ນອົງປະກອບໜຶ່ງທີ່ສໍາຄັນຂອງຄຸນທາດການເມືອງ, ມັນແມ່ນອາ

(1)(2) ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 90.

ລົມຈິດ, ແມ່ນແບບແຜນການເຄື່ອນໄຫວວຽກງານ ແລະການດຳລົງຊີວິດຂອງບຸກຄົນ, ຄອບຄົວ ແລະສັງຄົມຂອງພະນັກງານ, ສະມາຊິກພັກແມ່ນມີຄວາມສຳຄັນຍິ່ງເພາະວ່າຄົນຜູ້ໜຶ່ງເຖິງຈະມີລະດັບຄວາມຮູ້, ຄວາມສາມາດສູງປານໃດກໍ່ຕາມ ຖ້າຂາດຄຸນສົມບັດສິນທຳປະຕິວັດແລ້ວກໍຖືວ່າບໍ່ອາດນຳໃຊ້ໃຫ້ເປັນປະໂຫຍດແກ່ສັງຄົມ ແລະປະເທດຊາດໄດ້. ສະນັ້ນ, ຄຸນທາດການເມືອງ ແລະຄຸນສົມບັດປະຕິວັດໝາຍເຖິງຄຸນລັກສະນະສະອັນດີເດັ່ນທີ່ສະແດງອອກເຖິງລະບົບທັດສະນະແນວຄິດ, ການເຄື່ອນໄຫວດຳລົງຊີວິດ ແລະການປະຕິບັດໜ້າທີ່, ທີ່ມີລະບົບແບບແຜນ, ວິທະຍາສາດ ແລະກ້າວໜ້າຂອງພະນັກງານ ເຖິງຈະມີຄວາມຫຍຸ້ງຍາກກໍມີຄວາມອົດທົນ, ມຸ້ງໝັ້ນເພື່ອໃຫ້ສຳເລັດ. ແຕ່ໃດໆມາພັກເຮົາໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ແລະຖືເອົາການສຶກສາອົບຮົມການເມືອງ-ແນວຄິດໃຫ້ຖັນແຖວພະນັກງານເປັນໜຶ່ງໃນມາດຕະການຂອງການກໍ່ສ້າງ-ບຳລຸງຖັນແຖວພະນັກງານໃຫ້ມີຄວາມຮູ້, ມີຄວາມສາມາດ, ມີຄຸນທາດການເມືອງໜັກແໜ້ນ ແລະຄຸນສົມບັດສິນທຳປະຕິວັດ. ໃນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວໄດ້ໃຫ້ທັດສະນະວ່າ: "ບຸກລະດົມການເຝິກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະແບບແຜນໃນການປະພຶດປະຕິບັດຂອງສະມາຊິກພັກ-ພະນັກງານ"(1).

ພະແນກການຕ່າງປະເທດແຂວງຜົ້ງສາລີ ແມ່ນໂຄງປະກອບກົງຈັກໜຶ່ງຂອງອົງການປົກຄອງແຂວງ, ມີພາລະບົດບາດເປັນເສນາທິການໃນການຄົ້ນຄວ້າ ແລະນຳສະເໜີແນວທາງ, ນະໂຍບາຍການຕ່າງປະເທດຕໍ່ອົງຄະນະພັກ, ອົງການປົກຄອງແຂວງ ແລະກະຊວງການຕ່າງປະເທດໃນການຄຸ້ມຄອງ ແລະຈັດຕັ້ງປະຕິບັດວຽກງານການຕ່າງປະເທດໃນຂອບເຂດຄວາມຮັບຜິດຊອບຂອງແຂວງ. "ປັດຈຸບັນພະແນກການຕ່າງປະເທດແຂວງມີພະນັກງານທັງໝົດ 24 ຄົນ, ຍິງ 7 ຄົນ; ໃນນີ້, ປະຈຳການຢູ່ພະແນກຈຳນວນ 21 ຄົນ, ຍິງ 7 ຄົນ, ກຳລັງສຶກສາຕໍ່ຢູ່ພາຍໃນ ແລະຕ່າງປະເທດຄື ປະລິນຍາໂທຈຳນວນ 3 ຄົນ. ເປັນໜ່ວຍພັກເອກະລາດມີ ເລຂາໜ່ວຍພັກ ຈຳນວນ 1 ສະຫາຍ, ຄະນະພັກ ຈຳນວນ 2 ສະຫາຍ, ມີສະມາຊິກພັກທັງໝົດ 23 ສະຫາຍ, ຍິງ 6 ສະຫາຍ ກວມເອົາຫຼາຍກວ່າ 99% ຂອງຈຳນວນລັດຖະກອນທັງໝົດ"(2).

ເພື່ອຈັດຕັ້ງຜັນຂະຫຍາຍແນວທາງຂອງພັກກ່ຽວກັບການຍົກສູງຄຸນທາດການເມືອງໃຫ້ພະນັກງານ, ສະມາຊິກພັກຕອບສະໜອງໃນໄລຍະໃໝ່ໃຫ້ປາກົດຜົນເປັນຈິງນັ້ນ, ໃນໄລຍະກາງສະໄໝການຈັດຕັ້ງປະຕິບັດກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງຜົ້ງສາລີ ແຕ່ປີ (2020-2025) ແລະມະຕິກອງປະຊຸມໃຫຍ່ຄັ້ງທີ III ຂອງໜ່ວຍພັກພະແນກການຕ່າງປະເທດແຂວງຜົ້ງສາລີ ຜ່ານມາຄະນະພັກ, ຄະນະນຳພະແນກໄດ້ເອົາໃຈໃສ່ກໍ່ສ້າງ-ບຳລຸງພະນັກງານ, ສະມາຊິກພັກ ໄດ້ຖືເອົາວຽກງານສຶກສາອົບຮົມການເມືອງ-ແນວຄິດເປັນວຽກງານກົກໂດຍການຈັດຕັ້ງຫຼາຍຮູບການ

(1) ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 91.

(2) ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານການຕ່າງປະເທດແຂວງ ໃນໄລຍະກາງສະໄໝກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງຜົ້ງສາລີ, ປີ 2023, ໜ້າ 6.

ຫຼາຍເນື້ອໃນ ເປັນຕົ້ນແມ່ນການຈັດຕັ້ງເຜີຍແຜ່ເຊື່ອມຊຶມມະຕິກອງປະຊຸມ, ກົດລະບຽບພັກ, ຄຳສັ່ງ, ຂໍ້ແນະນຳ ແລະເອກະສານການເມືອງຕ່າງໆຂອງພັກ-ລັດໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນໄດ້ 18 ຄັ້ງ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 360 ເທື່ອຄົນ, ຍິງ 110 ເທື່ອຄົນ. ຄຽງຄູ່ກັນນັ້ນ, ຍັງໄດ້ນຳພາ-ຊີ້ນຳພະນັກງານເຂົ້າຮ່ວມເຊື່ອມຊຶມ, ຮັບຟັງການເຜີຍແຜ່ເອກະສານສຳຄັນ ແລະເລົ່າມູນເຊື້ອວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ, ວັນເກີດປະທານ ໄກສອນ ພົມວິຫານ, ວັນເກີດປະທານ ໄຊຈີມິນ, ວັນເກີດປະທານ ສຸພານຸວົງ, ວັນສ້າງຕັ້ງການທູດລາວ, ວັນຄົບຮອບສາຍພົວພັນການທູດລາວ-ຫວຽດນາມ, ລາວ-ຈີນ, ວັນຊາດທີ 2 ທັນວາ, ວັນສ້າງຕັ້ງ 3 ອົງການຈັດຕັ້ງມະຫາຊົນ ແລະການໂອ້ລົມຂອງການນຳຂັ້ນຕ່າງໆໄດ້ 81 ຄັ້ງ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 603 ເທື່ອຄົນ. ນອກນີ້, ຍັງຖືສຳຄັນວຽກງານຍົກລະດັບດ້ານທິດສະດີການເມືອງ ແລະລະດັບວິຊາສະເພາະ "ສົ່ງພະນັກງານ, ສະມາຊິກພັກໄປຍົກລະດັບລະທິດສະດີຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດທັງໝົດ 3 ຄົນຄື: ລະບົບປະລິນຍາຕີ ຈຳນວນ 2 ແລະລະບົບປະລິນຍາໂທ ຈຳນວນ 1 ຄົນ; ສົ່ງໄປຍົກລະດັບວິຊາສະເພາະຢູ່ພາຍໃນ ແລະຕ່າງປະເທດທັງໝົດ 5 ຄົນ, ຍິງ 1 ຄົນ; ໃນນັ້ນ, ລະບົບປະລິນຍາໂທ ຈຳນວນ 4 ຄົນ ແລະລະບົບປະລິນຍາຕີ ຈຳນວນ 1 ຄົນ"(1).

ຄຽງຄູ່ກັນນັ້ນ, ຄະນະພັກ, ຄະນະນຳຍັງໄດ້ເອົາໃຈໃສ່ນຳພາດຳເນີນຮ່ວມຊີວິດພັກຢ່າງເປັນປົກກະຕິ ເພື່ອສຳຫຼວດກວດກາລາຍງານສ່ອງແສງ ແລະປັບປຸງແກ້ໄຂປາກົດການຫຍໍ້ທໍ້, ສິ່ງທ້າທາຍທິດສອບດ້ານຕ່າງໆທີ່ເກີດຂຶ້ນພາຍໃນໜ່ວຍພັກເຮັດໃຫ້ວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນບັນລຸຄາດໝາຍ ສະແດງອອກໜ່ວຍພັກສາມາດຍາດໄດ້ນາມມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຢ່າງຕໍ່ເນື່ອງ. ການຕີລາຄາຈັດແບ່ງປະເພດສະມາຊິກພັກສາມາດຍາດໄດ້ປະເພດແຂງ ກວມ 99%, ປະເພດກາງ ກວມ 1% ໃນຈຳນວນສະມາຊິກພັກທັງໝົດ.

ນອກນີ້, ຄະນະພັກໄດ້ຖືສຳຄັນວຽກງານໃນການປະຕິບັດນະໂຍບາຍຕໍ່ພະນັກງານລັດຖະກອນຢ່າງຖືກຕ້ອງຕາມນະໂຍບາຍລວມ, ກົດໝາຍ ແລະລະບຽບການ ເພື່ອເຮັດໃຫ້ພະນັກງານມີຄວາມບຸກບືນທ້າວທັນໃນການປະຕິບັດໜ້າທີ່ການງານ ເປັນຕົ້ນແມ່ນພະນັກງານ-ລັດຖະກອນຄົບອາຍຸກະສຽນເຂົ້າຮັບເບັ້ຍບຳນານ, ປະຕິບັດເລື່ອນຊັ້ນ-ຂັ້ນເງິນເດືອນຂອງພະນັກງານ-ລັດຖະກອນເປັນປົກກະຕິ, ດຳເນີນການຍ້ອງຍໍສັນລະເສີນຜົນງານໃນການເຂົ້າຮ່ວມຮັບໃຊ້ຂະບວນການ ແລະການປະຕິບັດໜ້າທີ່ວຽກງານດ້ານຕ່າງໆ, ຜ່ານມາຍາດໄດ້ຜົນງານຍ້ອງຍໍຂັ້ນລັດຖະບານຈຳນວນ 5 ເທື່ອຄົນ, ຂັ້ນແຂວງຈຳນວນ 12 ເທື່ອຄົນ, ຍິງ 3 ເທື່ອຄົນ.

ປັດຈຸບັນຖັນແຖວພະນັກງານ-ສະມາຊິກພັກຂອງພະແນກການຕ່າງປະເທດແຂວງຜົ້ງສາລີນັບມື້ໄດ້ຮັບການເອົາໃຈໃສ່ບຳລຸງຍົກລະດັບທາງດ້ານປະລິມານ ແລະຄຸນນະພາບ

(1) ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານການຕ່າງປະເທດແຂວງ ໃນໄລຍະກາງສະໄໝກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງຜົ້ງສາລີ, ປີ 2023, ໜ້າ 6.

ຂຶ້ນຢ່າງບໍ່ຢຸດຢັ້ງ, ພະນັກງານ-ສະມາຊິກພັກ ຫຼັກແຫຼ່ງສ່ວນຫຼາຍມີຄວາມໜັກແໜ້ນທາງດ້ານການເມືອງ, ຮັກສາທັດສະນະຫຼັກໝັ້ນຊົນຊັ້ນກຳມະກອນ, ເຊື່ອມຊຶມຕໍ່ທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມີຄວາມຮັບຮູ້ ແລະເຂົ້າໃຈແນວທາງປ່ຽນແປງໃໝ່ໃນແຕ່ລະໄລຍະຂອງພັກ, ກົດໝາຍ, ມະຕິຄຳສັ່ງທີ່ລັດວາງອອກເປັນຢ່າງດີ, ມີຄວາມເຊື່ອໝັ້ນ ແລະເປັນເອກະພາບສູງຕໍ່ແນວທາງ, ນະໂຍບາຍຂອງພັກ, ຍຶດໝັ້ນອຸດົມການສັງຄົມນິຍົມ, ສັດຊື່ບໍລິສຸດຕໍ່ພັກ ແລະປະເທດຊາດ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ, ຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງຢູ່ສະເໝີ ເພື່ອຍົກສູງຄວາມຮູ້, ຄວາມສາມາດ ແລະບົດບາດໃນການນຳພາ-ຊີ້ນຳເຮັດແທ້ທຳຈິງ, ມີຫົວຄິດປະດິດສ້າງທີ່ຖືກຕ້ອງສອດຄ່ອງກັບແນວທາງ, ນະໂຍບາຍຂອງພັກ-ລັດ ແລະເປັນແບບຢ່າງທີ່ດີໃຫ້ແກ່ມະຫາຊົນ ແລະເອົາໃຈໃສ່ແກ້ໄຂສະພາບປາກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ກົມກອງຂອງຕົນກໍຄືໜ່ວຍພັກຢ່າງຖືກຕ້ອງສັນຕິ ແລະມີສະຕິລະວັງຕົວສູງຕໍ່ການແບ່ງແຍກຄວາມສາມັກຄີຂອງກຸ່ມຄົນບໍ່ດີຕໍ່ພັກ, ຕໍ່ສະມາຊິກພັກໃນຄວາມຮັບຜິດຊອບຂອງຕົນ, ເປັນແບບຢ່າງໃນການດຳລົງຊີວິດ, ເຮັດຫຼ້ອນໜ້າທີ່ຂອງຕົນທີ່ການຈັດຕັ້ງມອບໝາຍໃຫ້ເປັນຢ່າງດີ ແລະມີຄວາມຮັບຜິດຊອບສູງ.

ຄຽງຄູ່ກັບຜົນສຳເລັດຄືດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ການເຄື່ອນໄຫວວຽກງານຍົກສູງຄຸນທາດການເມືອງໃຫ້ຖັນແຖວພະນັກງານ-ສະມາຊິກພັກຢູ່ພະແນກການຕ່າງປະເທດແຂວງຜົ້ງສາລີ ຍັງມີບາງດ້ານທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂເຊັ່ນ:

1). ການເຮັດວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ສະມາຊິກພັກແຕ່ລະເປົ້າໝາຍຍັງບໍ່ທັນຮັດກຸມ, ຍັງເຮັດແບບລວມໆ, ເນື້ອໃນບໍ່ທັນເລິກເຊິ່ງເຖິງຖອງ ແລະຄຸນະພາບບໍ່ທັນສູງເຮັດໃຫ້ຄວາມຮັບຮູ້ ແລະຄວາມເຂົ້າໃຈຕໍ່ແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບຂອງລັດບໍ່ທັນໜັກແໜ້ນ ແລະເລິກເຊິ່ງ.

2). ພະນັກງານ-ສະມາຊິກພັກຈຳນວນໜຶ່ງລະດັບຄວາມຮັບຮູ້, ຄວາມເຂົ້າໃຈກ່ຽວກັບທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງ, ນະໂຍບາຍຂອງພັກ, ກົດໝາຍຂອງລັດບໍ່ທັນເລິກເຊິ່ງ ແລະໜັກແໜ້ນເທົ່າທີ່ຄວນ, ເມື່ອພົບກັບສະພາບແວດລ້ອມສາກົນ ແລະພາຍໃນກະທົບເຂົ້າໃສ່ຈຶ່ງມີແນວຄິດຫວັ່ນໄຫວ ແລະຄອນແຄນ.

3). ບັນດາປາກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ພາຍໃນກົມກອງເປັນສິ່ງທ້າທາຍຕໍ່ຖັນແຖວພະນັກງານ-ສະມາຊິກພັກ ແຕ່ວິທີການສະກັດກັ້ນບໍ່ທັນຈະແຈ້ງ, ການແກ້ໄຂບໍ່ທັນເຂັ້ມງວດ ແລະເດັດຂາດແທ້, ບາງຄັ້ງຍັງມີລັກສະນະອະພິສິດສອດເຂົ້າມາ.

4). ສະມາຊິກພັກ-ພະນັກງານຈຳນວນໜຶ່ງຍັງຂາດຄຸນສົມບັດສິນທຳປະຕິວັດມີແນວຄິດອັດຕະວິໄສ, ຫ່າງເຫີນຈາກມະຫາຊົນ, ຍັງມີແນວຄິດພຶດຕິກຳເຫັນຜົນປະໂຫຍດສ່ວນຕົວຢູ່ເໜືອຂອງຜົນປະໂຫຍດສ່ວນລວມ, ຂາດຄວາມເປັນແບບຢ່າງໃຫ້ແກ່ມະຫາຊົນ, ຫຼິ້ນກິນຟຸມເຟືອຍ, ຟຸມເຟືອຍຊັບສົມບັດຂອງສ່ວນລວມ, ມີແນວຄິດປະຈົບປະແຈງ, ກຸ່ມກ້ອນ ແລະອື່ນໆ.

ເພື່ອຍົກສູງຄຸນທາດການເມືອງ ແລະຄຸນສົມບັດສິນທຳປະຕິວັດໃຫ້ແກ່ພະນັກງານສະມາຊິກພັກພະແນກການຕ່າງປະເທດ

ແຂວງຜົ້ງສາລີນັບມື້ນັບສູງຂຶ້ນຕອບສະໜອງກັບສະພາບໃນສະເພາະໜ້າ ແລະຍາວນານຕາມທັດສະນະຂອງຜູ້ຂຽນ ຄວນມີທິດທາງໃນການແກ້ໄຂດັ່ງນີ້:

ໜຶ່ງ, ເພີ່ມທະວີການສຶກສາອົບຮົມວຽກງານການເມືອງ-ແນວຄິດໃຫ້ຖັນແຖວພະນັກງານ-ສະມາຊິກພັກທຸກສະຫາຍຢ່າງເລິກເຊິ່ງເຖິງຖອງທົ່ວເຖິງ, ໂດຍການເຮັດເປັນລະບົບຄົບຊຸດ, ມີແຜນງານ, ໂຄງການລະອຽດຈະແຈ້ງ, ທັງປຸກລະດົມຂົນຂວາຍມະຫາຊົນເຂົ້າຮ່ວມເຊື່ອມຊຶມແນວທາງ, ນະໂຍບາຍຂອງພັກນິຕິກຳຂອງລັດໃຫ້ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງດ້ວຍຫຼາຍຮູບແບບ, ຫຼາຍວິທີການເພື່ອໃຫ້ເຂົ້າເຖິງທຸກເປົ້າໝາຍ, ພ້ອມນັ້ນ, ກໍດຳເນີນຮ່ວມຊີວິດພັກປະຈຳເດືອນຢ່າງເປັນປົກກະຕິເພື່ອສຳຫຼວດກວດກາ, ຕຳນິກໍ່ສ້າງເຂົາເຈົ້າໃຫ້ກາຍເປັນພະນັກງານ-ສະມາຊິກພັກຜູ້ສືບທອດແລະເດີນຕາມອຸດົມການສັງຄົມນິຍົມ, ມີນ້ຳໃຈເສຍສະລະເພື່ອຜົນປະໂຫຍດສ່ວນລວມ, ມີຄວາມຈົ່ງຮັກພັກດີຕໍ່ລະບອບປະຊາທິປະໄຕ ປະຊາຊົນ ມີຄວາມເຊື່ອໝັ້ນຕໍ່ແນວທາງຂອງພັກ, ມີນ້ຳໃຈຮັກຊາດຮັກບ້ານເກີດເມືອງນອນ, ມີສະຕິຕໍ່ການຈັດຕັ້ງ, ເຄື່ອນໄຫວຖືກຕ້ອງຕາມກົດໝາຍ, ລະບຽບ ແລະຕ້ານທຸກເລ່ຫຼ່ຽມກົນອຸບາຍທັບປ່ຽນໂດຍສັນຕິຂອງສັດຕູທີ່ຫວັງມ້າງເພທຳລາຍລະບອບໃໝ່ຂອງພວກເຮົາ.

ສອງ, ຍົກສູງຄຸນນະພາບຂອງພະນັກງານ-ສະມາຊິກພັກໃຫ້ສູງຂຶ້ນດ້ວຍການຍົກລະດັບຄວາມຮູ້ທາງດ້ານທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ເພື່ອໝູນໃຊ້ເຂົ້າໃນແນວທາງການເມືອງຂອງພັກໃນພາລະກິດປ່ຽນແປງໃໝ່ຮອບດ້ານ ແລະມີຫຼັກການຂອງພັກເຮົາ, ເດີນຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມ.

ສາມ ເພີ່ມທະວີວຽກງານກວດກາດ້ວຍການສ້າງກົນໄກການກວດກາ, ຕ້ານ ແລະສະກັດກັ້ນບັນດາປະກົດການຫຍໍ້ທໍ້ໃນຖັນແຖວພະນັກງານ-ສະມາຊິກພັກກວດກາຕາມລະບຽບຂອງພັກ, ກົດໝາຍຂອງລັດ ເມື່ອກວດກາພົບເຫັນແລ້ວ ຕ້ອງມີມາດຕະການເດັດຂາດໃນການແກ້ໄຂ ແລະປັບປຸງຕາມກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະຮັບປະກັນໃຫ້ໄດ້ດ້ານຄວາມຍຸຕິທຳ.

ສີ່, ຄະນະພັກ-ຄະນະນຳຄວນເອົາໃຈໃສ່ຕິດຕາມ, ກວດກາຢ່າງໃກ້ຊິດຕິດແທດ ຖືເອົາການນຳພາ-ຊີ້ນຳວຽກງານການເມືອງແນວຄິດເປັນກົກ, ເປັນວຽກງານແຖວໜ້າໄປກ່ອນໝູ່ເອົາໃຈໃສ່ປັບປຸງປົວແປງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງພະນັກງານ-ສະມາຊິກພັກ, ສ້າງສະຕິເຄົາລົບ ແລະປະຕິບັດລະບຽບວິໄນຢ່າງເຂັ້ມງວດ, ຕ້ານ ແລະສະກັດກັ້ນແນວຄິດເຫັນແກ່ຕົວ, ສ່ວນຕົວ, ອາດຍາສິດ, ແນວຄິດກຸ່ມກ້ອນເຊື້ອສາຍ, ຫ່າງເຫີນມະຫາຊົນ, ຫຼິ້ນກົນຟຸມເຟືອຍ, ແນວຄິດຖືຜົນປະໂຫຍດສ່ວນຕົວສູງກວ່າສ່ວນລວມ, ເມື່ອພົບເຫັນປາກົດການດັ່ງກ່າວ ຄະນະພັກຕ້ອງໄດ້ແກ້ໄຂຢ່າງເດັດຂາດ ແລະໃຫ້ທັນການ.

ສັງລວມແລ້ວ, ການຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງພະນັກງານ-ສະມາຊິກພັກຢູ່ພະແນກການຕ່າງປະເທດແຂວງຜົ້ງສາລີ ແຕ່ລະຄົນບໍ່ແມ່ນເກີດຂຶ້ນເອງໂດຍບໍ່ເຮັດຫຍັງແຕ່ມັນເກີດຂຶ້ນໄດ້ຍ້ອນຜ່ານການສຶກສາອົບຮົມການເມືອງ-ແນວຄິດທິດສະດີ, ຜ່ານການເຝິກຝົນຫຼໍ່ຫຼອມຢ່າງລະອຽດລະອ້ຽວ, ອົດທົນດ້ວຍໄລຍະເວລາ

ອັນຍາວນານພໍສົມຄວນ, ທັງມີລັກສະນະຮອບດ້ານຂອງພະນັກງານຜູ້ໜຶ່ງ, ແຕ່ໃນນີ້ປັດໄຈສຳຄັນຕັດສິນກວ່າໝູ່ໝົດຕ້ອງຜ່ານການກໍ່ສ້າງ-ບຳລຸງຢ່າງເປັນລະບົບຄົບຊຸດທາງດ້ານທິດສະດີ ໂດຍສະເພາະແມ່ນລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບຂອງລັດ, ທັງໝົດນີ້ ແນໃສ່ຍົກສູງຄຸນທາດການເມືອງດ້ວຍການປູກຝັງຈິດສຳນຶກໄວ້ຢູ່ໃນລະບົບແນວຄິດ, ຈິດຕະສາດເຮັດໃຫ້ສະມາຊິກພັກພະນັກງານ-ລັດຖະກອນນັ້ນເກີດມີຈິດໃຈຮັກຊາດ, ຮັກລະບອບໃໝ່ ແລະຮັກບ້ານເກີດເມືອງນອນຂອງຕົນ, ມີທັດສະນະຫຼັກໝັ້ນຊົນຊັ້ນກຳມະກອນ, ມີຄວາມເດັດດ່ຽວໜຽວແໜ້ນເດີນຕາມອຸດົມການສັງຄົມນິຍົມທີ່ພັກ ແລະປະຊາຊົນກຳນົດຈຸດໝາຍເອົາໄວ້, ມີຈຸດຢືນທີ່ຖືກຕ້ອງບໍ່ຄອນແຄນຕໍ່ອຸດົມການ, ມີແບບແຜນວິທີເຮັດວຽກ, ມີແບບແຜນດຳລົງຊີວິດທີ່ປອດໃສຂາວສະອາດ, ມີຄວາມເປັນແບບຢ່າງໃຫ້ແກ່ມະຫາຊົນທັງມີຄວາມເປັນເອກະພາບຕໍ່ແນວທາງຂອງພັກ, ກົດໝາຍຂອງລັດ ແລະມີຄວາມເຊື່ອໝັ້ນຢ່າງຕາຍໃຈຕໍ່ການນຳພາຂອງພັກປະຊາຊົນ ປະຕິວັດລາວຢ່າງແທ້ຈິງ.




ພິທີເປີດຂະບວນການຮັກຊາດພັດທະນາ ຂອງພະແນກການຕ່າງປະເທດ ແຂວງຜົ້ງສາລີ, ຄັ້ງວັນທີ 26 ມິຖຸນາ 2023